ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

═══000═══

ອົງການພຸດທະສາສະໜາສຳພັນ
ແຫ່ງ ສປປ ລາວ
ກົມມາທິການສາທາລະນຸປະການ
ສຳນັກງານວັດພຣະທາດຫຼວງເໜືອ

ເລກທີ: 213../ອພສ.ກສປ
ວັນທີ. 12./.08./2019

ໜັງສືອະນຸຍາດ

ຈະເລີນພອນ: ທ່ານລັດຖະມົນຕີ ກະຊວງພາຍໃນ

ເລື່ອງ: ຂໍອະນຸຍາດກໍ່ສ້າງວັດບ້ານແກ້ງກຸຍ ບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ

- ອີງຕາມ: ທຳມະນູນສົງລາວ, ສະບັບປັບປຸງໃໝ່ ພສ. 2561
- ອີງຕາມ: ດຳລັດ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ໝວດທີ 03 ມາດຕາທີ 16 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ສປປ ລາວ
- ອີງຕາມ: ໜັງສືສະເໜີຂອງເຈົ້າແຂວງ ແຂວງເຊກອງ ສະບັບເລກທີ 51/ຈຂ.ຊກ, ລົງວັນທີ 10 ກໍລະກົດ 2019 ວ່າດ້ວຍ ການຂໍອະນຸຍາດກໍ່ສ້າງວັດບ້ານແກ້ງກຸຍ ບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ

ສູນກາງອົງການພຸດທະສາສະໜາສຳພັນລາວ
ຈຶ່ງເຫັນດີ ອະນຸຍາດໃຫ້ສ້າງວັດບ້ານແກ້ງກຸຍ ບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ

ດັ່ງນັ້ນ, ສູນກາງອົງການພຸດທະສາສະໜາສຳພັນລາວ ຈຶ່ງຈະເລີນພອນມາຍັງທ່ານເພື່ອຄົ້ນຄວ້າ ພິຈາລະນາ ແລະ ອະນຸມັດ ຕາມທາງທີ່ຄວນດ້ວຍ.

ຄະນະບໍລິຫານງານປະຈຳສູນກາງ ອພສ
ຫົວໜ້າກົມມາທິການສາທາລະນຸປະການ

ພຣະອາຈາຣຍ໌ ບຸນທະວີ ປະສິດທິສັງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເລກທີ 51 /ຈຂ.ຊກ

ເຊກອງ, ວັນທີ 10 . 07 . 2019

ໜັງສືສະເໜີ

ຮຽນ: ທ່ານ ລັດຖະມົນຕີກະຊວງພາຍໃນ ທີ່ນັບຖື!

ເລື່ອງ: ພິຈາລະນາອອກຂໍ້ຕົກລົງອະນຸມັດ ການກໍ່ສ້າງສາສະນະສະຖານ (ວັດ) ບ້ານແກ້ງກຸຍ ເມືອງກະລຶມ.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III, ໝວດທີ 04, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ ຂອງເຈົ້າແຂວງ.
- ອີງຕາມ ດຳລັດ ຂອງລັດຖະບານ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວຂອງສາສະໜາ ຢູ່ ສປປ ລາວ;
- ອີງຕາມໜັງສືສະເໜີ ຂອງພະແນກພາຍໃນແຂວງ ສະບັບເລກທີ 167/ພນ, ລົງວັນທີ 30 ເມສາ 2019 ຂອງພະແນກພາຍໃນ ແຂວງ.

ອີງການປົກຄອງແຂວງ-ແຂວງເຊກອງ ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ລັດຖະມົນຕີກະຊວງພາຍໃນ ເພື່ອຄົ້ນຄ້ວາ ພິຈາລະນາອະນຸມັດ ການກໍ່ສ້າງສາສະນະສະຖານ (ວັດ)ບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ ສະນັ້ນ, ພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນບ້ານ ແລະ ອີງການປົກຄອງບ້ານ ມີຄວາມເຫັນດີເປັນເອກະພາບກັນ ມີຄວາມຫ້າວຫັນ ຂະຫຍັນພຽນຮັກສາຮີດຄອງປະເພນີ ແລະ ຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ ມີຈິດໃຈເຫຼື້ອມໃສສັດທາທາງພຸດທະສາສະໜາ ໂດຍໃຊ້ແຫຼ່ງທຶນລະດົມແຜ່ປັດໃຈສັດທາຈາກອອກຕົນຍາດໂຍມພາຍໃນບ້ານ ແລະ ຈາກທຸກພາກສ່ວນ ທີ່ມີຈິດໃຈສັດທາອັນຜ່ອງໃສ ແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍທາງດ້ານວັດທະນະທຳອັນດີງາມ ຂອງຊາດ ແລະ ທັງເປັນພື້ນຖານການພັດທະນາ ເສດຖະກິດ-ສັງຄົມ ໃນອານາຄົດ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາຕາມລະບຽບການດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ເຈົ້າແຂວງ

ບ່ອນນຳສົ່ງ:

1. ກົມຊົນເຜົ່າ-ສະສະໜາ 1 ສະບັບ;
2. ພະແນກພາຍໃນແຂວງ 1 ສະບັບ;
3. ຫ້ອງວ່າການແຂວງ 1 ສະບັບ;
4. ເກັບຮັກສາໄວ້ 1 ສະບັບ.

(ຕາ: ເຈົ້າແຂວງ ແຂວງເຊກອງ)

ຄຳເພີຍ ບຸດດາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ພະແນກພາຍໃນ

ເລກທີ157/ພນ.ຊກ

ເຊກອງ, ວັນທີ 04 ກໍລະກົດ 2019

ບົດລາຍງານ

ຮຽນ: ທ່ານ ເຈົ້າແຂວງ ທີ່ນັບຖືຢ່າງສູງ!

ເລື່ອງ: ລາຍງານຜົນສຳເລັດກ່ຽວກັບຂັ້ນຕອນ ລະບຽບຫຼັກການ ຂອງການປະກອບເອກະສານ ກໍ່ສ້າງ ວັດບ້ານແກ້ງກຸຍ ເມືອງກະລຶມ.

- ອີງຕາມ ດຳລັດ ຂອງລັດຖະບານ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວຂອງສາສະໜາ ຢູ່ ສປປ ລາວ (ສະບັບປັບປຸງ);
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງພາຍໃນ ເລກທີ 591/ພນ, ວັນທີ 15 ພະຈິກ 2018 ວ່າດ້ວຍການ ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກພາຍໃນແຂວງ, ນະຄອນຫຼວງວຽງຈັນ.
- ອີງຕາມ ທິດຊີ້ນຳ ຂອງທ່ານເຈົ້າແຂວງ ຄັ້ງວັນທີ 08 ພຶດສະພາ 2019.

ພະແນກພາຍໃນແຂວງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ຊາບຜົນສຳເລັດກ່ຽວກັບຂັ້ນຕອນລະບຽບຫຼັກການ ຂອງການປະກອບເອກະສານ ການກໍ່ສ້າງວັດ ບ້ານແກ້ງກຸຍ ເມືອງກະລຶມ ດັ່ງນີ້:

1) ປະຊາຊົນພາຍໃນບ້ານ, ອົງການປົກຄອງບ້ານມີຄວາມເອກະພາບ, ເຫັນດີໃຫ້ຂັ້ນເທິງພິຈາລະນາກໍ່ສ້າງວັດ ໂດຍດຳເນີນຕາມຂັ້ນຕອນ ຂອງລະບຽບ ກົດໝາຍ;

2) ຫ້ອງການພາຍໃນເມືອງ, ຫ້ອງການແນວລາວສ້າງຊາດເມືອງ, ຫ້ອງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວເມືອງ, ຫ້ອງການໂຍທາທິການເມືອງ ແລະຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ ມີເອກະສານຢັ້ງຢືນ ແລະ ເຫັນດີການກໍ່ສ້າງວັດເມືອງກະລຶມ;

3) ອົງການປົກຄອງເມືອງ, ຜູ້ປະຈຳການເຈົ້າເມືອງກະລຶມ ມີໜັງສືສະເໜີເຖິງພະແນກພາຍໃນແຂວງ ສະບັບ ເລກທີ 240/ ຈມ.ກລ, ລົງວັນທີ 27 ທັນວາ 2018;

4) ພະແນກພາຍໃນແຂວງ ໄດ້ເຮັດໜັງສືສະເໜີມາຍັງພະແນກການທີ່ກ່ຽວຂ້ອງ ອ້ອມຂ້າງແຂວງ ເພື່ອ ປະກອບຄຳເຫັນໃສ່ເອກະສານ, ພະແນກການທີ່ກ່ຽວຂ້ອງ ມີເອກະສານຢັ້ງຢືນຄວາມຖືກຕ້ອງ;

5) ກອງປະຊຸມຄົ້ນຄວ້າປຶກສາຫາລື ເພື່ອການກໍ່ສ້າງ ວັດ ຢູ່ບ້ານແກ້ງກຸຍ ເມືອງກະລຶມ ໃນຕອນເຊົ້າວັນທີ 7 ມີນາ 2019 ທີ່ຫ້ອງປະຊຸມໃຫຍ່ເມືອງກະລຶມ ໂດຍພາຍໃຕ້ການເປັນປະທານຮ່ວມຂອງທ່ານ ອຸດົມສຸກ ບຸດ

ສອນທຽນ ຄະນະປະຈຳພັກເມືອງ ຮອງເລຂາພັກເມືອງ, ພຣະອາຈານ ບຸນຍັງ ແກ້ວເມືອງຫຼວງ ຮອງປະທານ ອພສແຂວງ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 22 ຄົນ, ຍິງ 01 ຄົນ, ໃນນັ້ນມີ ພຣະສົງ 4 ອົງ, ບັນດາພະແນກການທີ່ມາຈາກແຂວງ 5 ຄົນ, ຍິງ 0 ຄົນ; ອົງການປົກຄອງຂັ້ນເມືອງມີ 09 ຄົນ, ຍິງ 01 ຄົນ; ອົງການປົກຄອງຂັ້ນບ້ານນາຍບ້ານ 4 ຄົນ;

6) ເຈົ້າຄະນະ ອພສ ແຂວງເຊກອງ ມີຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບ ໃນການເຄື່ອນໄຫວການກໍ່ສ້າງ, ສ້າງຕັ້ງວັດໃໝ່ຢູ່ເມືອງກະລຶມ ພ້ອມດ້ວຍໜັງສືສະເໜີ ນ້ອມນະມັດສະການ: ພຣະອາຈານໃຫຍ່ ຫົວໜ້າຫ້ອງການບໍລິຫານງານສູນກາງ ອົງການພຸດທະສາສະໜາສຳພັນ ແຫ່ງ ສປປ ລາວ ສະບັບເລກທີ 069 /ອພສ, ລົງວັນທີ 5 ມີຖຸນາ 2019;

7) ພະແນກພາຍໃນແຂວງ ກໍ່ໄດ້ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ, ໄດ້ຄົ້ນຄວ້າ, ກວດກາ, ການຜ່ານ ແລະ ສັງລວມການປະກອບເອກະສານຕ່າງໆໃຫ້ຖືກຕ້ອງສອດຄ່ອງ ກັບດຳລັດ ສະບັບເລກທີ 315/ລບ ທີ່ລະບຸໄວ້ຢູ່ ມາດຕາ 16 ແລະ ມາດຕາ 17 ການກໍ່ສ້າງ, ບູລະນະ ແລະ ປະຕິສັງຂອນສາສະນະສະຖານ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຮັບຊາບ ແລະ ຂໍ້ທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ເຊັນແທນຫົວໜ້າພະແນກ

ຮອງຫົວໜ້າພະແນກ

ສຸວັນວິໄລ ແກ້ວວິໄລ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງກະລຶມ

ຫ້ອງການນາຍບ້ານເທດສະບານ ເລກທີ 01--/ ນບ

ວັນທີ-24/12/2018

ໃບສະເໜີ

ເລື່ອງ: ຂໍສ້າງວັດ ໜຶ່ງວັດຢູ່ເທດສະບານເມືອງກະລຶມ

ຂໍນ້ອມນະມັດສະການ ພະອາຈານ ອ.ພ.ສ ແຂວງເຊກອງ.

(ໂດຍຜ່ານອົງການຈັດຕັ້ງທຸກຂັ້ນທີ່ກ່ຽວຂ້ອງ)

ເພື່ອປະຕິບັດຕາມດຳລັດເລກທີ 315/ລບ, ລົງວັນທີ 16 ສິງຫາ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສ ປປ ລາວ.

-ອີງໃສ່: ດຳລັດໝວດທີ 1. ມາດຕາ 4, ນະໂຍບາຍຂອງລັດກ່ຽວກັບວຽກງານສາສະໜາ ແລະ ໝວດທີ 3. ມາດຕາ 16, ການກໍ່ສ້າງບູລະນະ ແລະ ປະຕິສັງຂອນ, ສາສະນະສະຖານ, ສາສະໜາ.

-ອີງໃສ່: ການຕົກລົງເຫັນດີເປັນເອກະພາບຂອງພໍ່ແມ່ປະຊາຊົນ, ພ້ອມອົງການຈັດຕັ້ງທຸກຂັ້ນໃນບ້ານ ເທດສະບານເມືອງກະລຶມ.

ຈຸດປະສົງ: ເພື່ອສຶກສາອົບຮົມ-ເຕົ້າໂຮມຄວາມສາມັກຄີ ປອງດອງ ປະຊາຊົນບັນດາເຜົ່າ, ສາສະໜາ ແລະ ຊັ້ນຄົນໃນສັງຄົມ ໃຫ້ປະກອບສ່ວນໃນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ສະນັ້ນ: ອົງການຈັດຕັ້ງທຸກຂັ້ນ-ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນບ້ານເທດສະບານເມືອງກະລຶມ, ຈຶ່ງໄດ້ພ້ອມກັນສະເໜີມາຍັງຂັ້ນເທິງ, ພ້ອມອົງການຈັດຕັ້ງທຸກຂັ້ນທີ່ກ່ຽວຂ້ອງ. ຈົ່ງຄົ້ນຄວ້າພິຈາລະນາ ຄຳສະເໜີ ຕາມຄວາມເໝາະສົມຄວນດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)

ຄະນະປົກຄອງບ້ານ ແນວໂຮມບ້ານ ແມ່ຍິງບ້ານ

ສົງຄຳ ສູນບົວກັວ

ຊາວໜຸ່ມບ້ານ ປກສ - ປກຊ ໜ່ວຍໄກ່ເກ່ຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງກະລຶມ

ບ້ານເທດສະບານ

ເລກທີ-01 --/ນບ

ວັນທີ-24/12/2018

ໜັງສືສະເໜີ

ຮຽນ: ຄະນະຫ້ອງການພາຍໃນເມືອງ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

(ໂດຍຜ່ານອົງການຈັດຕັ້ງທີ່ກ່ຽວຂ້ອງທຸກຂັ້ນ)

ເລື່ອງ: ສະເໜີ ກໍ່ສ້າງ ຕັ້ງວັດ ຢູ່ເທດສະບານເມືອງກະລຶມ ໜຶ່ງວັດ.

-ອີງຕາມ: ດຳລັດ ເລກທີ 315/ລບ, ລົງວັນທີ 16 ສິງຫາ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ. ໝວດທີ 1 ມາດຕາ4 ນະໂຍບາຍຂອງລັດກ່ຽວກັບວຽກງານ ສາສະໜາແລະ ໝວດທີ 3. ມາດຕາ 16, ການກໍ່ສ້າງບູລະນະ ແລະ ປະຕິສັງຂອນ, ສາສະນະສະຖານ, ສາສະໜາ.

-ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 649/ພນ, ລົງວັນທີ 24 ສິງຫາ 2016 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ.

-ອີງຕາມ: ການເຫັນດີຕົກລົງ ເປັນເອກະພາບ ໃນກອງປະຊຸມພາຍໃນ 5 ໝູ່ບ້ານເທດສະບານເມືອງກະລຶມ ພ້ອມດ້ວຍກົກເລົ່າເຖົ້າແກ ພໍ່ແມ່ປະຊາຊົນ ແລະ ການຈັດຕັ້ງທຸກຂັ້ນ.ວ່າດ້ວຍເຫັນດີສ້າງຕັ້ງວັດ ໜຶ່ງວັດ.

ອຳນາດການປົກຄອງບ້ານ ເທດສະບານເມືອງ

ຂໍຖືເປັນກຽດຮຽນສະເໜີມາຍັງ ຄະນະຫ້ອງການພາຍໃນເມືອງກະລຶມ ເພື່ອຄົ້ນຄວ້າພິຈາລະນານຳສະເໜີ ຕໍ່ໃຫ້ ທ່ານເຈົ້າເມືອງ ເພື່ອອອກໜັງສືສະເໜີ ການກໍ່ສ້າງຕັ້ງວັດ ຢູ່ເທດສະບານເມືອງກະລຶມ ແຂວງ ເຊກອງ, ໃຫ້ຖືກຕ້ອງສອດຄ່ອງກັບລະບຽບຫຼັກການກຳນົດໄວ້.

ສະນັ້ນ, ຄະນະປົກຄອງບ້ານເທດສະບານເມືອງ, ຈຶ່ງຮຽນສະເໜີມາຍັງ ທ່ານ ຄະນະຫ້ອງການພາຍໃນ ເມືອງກະລຶມ ພິລະນາຄົ້ນຄວ້າຕາມຄວາມເໝາະສົມຄ ວນດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)

ນາຍບ້ານ - ບ້ານແກ້ງກຸຍ

ນາຍບ້ານ ບ້ານແກ້ງກຸຍ

ສີງຄຳ ສູນບົດແກ້ວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງກະລຶມ

ຫ້ອງການນາຍບ້ານເທດສະບານ

ເລກທີ: 01--/ນບ

ວັນທີ: 24/12/2018

ບົດບັນທຶກ

ກອງປະຊຸມຂອງອຳນາດການປົກຄອງບ້ານເທດສະບານເມືອງ

ວ່າດ້ວຍການຄົ້ນຄວ້າປຶກສາຫາລື ການສ້າງຕັ້ງວັດ ຢູ່ເທດສະບານເມືອງ ໜຶ່ງວັດ.

-ອີງຕາມ: ດຳລັດ ເລກທີ 315/ລບ, ລົງວັນທີ 16 ສິງຫາ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ, ໝວດທີ1, ມາຕາ4, ນະໂຍບາຍຂອງລັດກ່ຽວກັບວຽກສາສະໜາແລະໝວດທີ 3. ມາດຕາ 16, ການກໍ່ສ້າງບູລະນະ ແລະ ປະຕິສັງຂອນ, ສາສະນະສະຖານ, ສາສະໜາ.

-ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 649/ພນ, ລົງວັນທີ 24 ສິງຫາ 2016 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ.

-ອີງຕາມ: ການປຶກສາຫາລື ແລະ ຕົກລົງເຫັນດີເປັນເອກະພາບໃນກອງປະຊຸມ ຄັ້ງວັນທີ 1 / 12 / 2018 ວ່າດ້ວຍເຫັນດີສະເໜີ ກໍ່ສ້າງຕັ້ງວັດ ຢູ່ 5 ໝູ່ບ້ານ ເທດສະບານເມືອງ ໃຫ້ໄດ້ໜຶ່ງວັດ.

ກອງປະຊຸມປຶກສາຫາລືໄດ້ຈັດຂຶ້ນໃນຕອນເຊົ້າ ຂອງວັນທີ 1/ 12 / 2018 ເວລາ 8 ໂມງ: 30ນາທີ ຢູ່ທີ່ຫ້ອງການນາຍບ້ານເທດສະບານເມືອງກະລຶມ.ໂດຍພາຍໃຕ້ການເປັນປະທານ ຂອງ**ທ່ານນາງມະນີສອນ ປຽງສະຫວັນ**ຄະນະປະຈຳພັກປະທານແນວລາວຊ້າງຊາດເມືອງ ເປັນປະທານ ເຊິ່ງມີປະຊາຊົນເຂົ້າຮ່ວມນຳລວມທັງໝົດມີ: 448 ຄົນ, ຍິງ.358 ຄົນເຊິ່ງໃນນັ້ນ ມີບັນດາຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມດັ່ງນີ້

1. ຫ້ອງການແນວລາວຊ້າງຊາດເມືອງ.
2. ຫ້ອງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວເມືອງ.
3. ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ.
4. ຫ້ອງການພາຍໃນເມືອງ.
5. ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ.
6. ຫ້ອງວ່າການປົກຄອງເມືອງ.
7. ບັນດາສະຫາຍ ເລຂາໜ່ວຍພັກ-ນາຍບ້ານພາຍໃນ 5 ບ້ານ ພ້ອມດ້ວຍການຈັດຕັ້ງທຸກຂັ້ນຂອງເຂົ້າຮ່ວມນຳ.

ກອງປະຊຸມໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມດັ່ງກ່າວ ໄດ້ຕົກລົງເຫັນດີ ເປັນເອກະພາບ ການກໍ່ສ້າງວັດ ຢູ່ເທດສະບານ ເມືອງ ໜຶ່ງວັດ.

ສະນັ້ນ. ທາງອຳນາດການປົກຄອງບ້ານ ທັງ 5 ໝູ່ບ້ານ ເທດສະບານເມືອງ ຈິ່ງສ້າງບົດບັນທຶກກອງປະຊຸມປຶກສາຫາລື ການກໍ່ສ້າງຕັ້ງວັດ ຢູ່ເທດສະບານເມືອງກະລຶມ ໜຶ່ງວັດ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດດ້ວຍດີ.

นายບ້ານ - ບ້ານແກ້ງກຸຍ ຜູ້ບັນທຶກ.

ສິງຄຳ ສູນບົດແກ້ວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ພະແນກພາຍໃນແຂວງ

ເລກທີ 167 /ພນ.ຊກ

ເຊກອງ, ວັນທີ 30 ເມສາ 2019

ຫ້ອງວ່າການປົກຄອງ ແຂວງເຊກອງ
ຂາເຂົ້າ ເລກທີ : 315
ວັນທີ : 01.05.2019

ໜັງສືສະເໜີ

ຮຽນ: ທ່ານ ເຈົ້າແຂວງ ທີ່ນັບຖືຢ່າງສູງ!

ເລື່ອງ: ພິຈາລະນາອະນຸມັດການກໍ່ສ້າງສາສະນະສະຖານ ວັດບ້ານແກ້ງກຸຍ ເມືອງກະລຶມ.

- ອີງຕາມ ດຳລັດ ຂອງລັດຖະບານ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວຂອງສາສະໜາ ຢູ່ ສປປ ລາວ (ສະບັບປັບປຸງ);
- ອີງຕາມ ຂໍ້ຕົກລົງ ລັດຖະມົນຕີກະຊວງພາຍໃນ ສະບັບເລກທີ 591/ພນ, ລົງວັນທີ 15 ພະຈິກ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກພາຍໃນແຂວງ, ນະຄອນຫຼວງ;
- ອີງຕາມ ໜັງສືສະເໜີ ຂອງທ່ານເຈົ້າເມືອງ-ເມືອງກະລຶມ ສະບັບເລກທີ 240/ຈມ,ກລ, ລົງວັນທີ 27 ທັນວາ 2018.

ພະແນກພາຍໃນແຂວງ ໄດ້ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຫັນວ່າຖືກຕ້ອງ ແລະ ສອດຄ່ອງກັບລະບຽບຫຼັກການ ຂອງການສະເໜີກໍ່ສ້າງສາສະນະສະຖານ ທີ່ໄດ້ລະບຸໄວ້ໃນ ມາດຕາ 17 ຂອງດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວສາສະໜາຢູ່ ສປປ ລາວ, ສະບັບເລກທີ 315/ລບ, ວັນທີ 16 ສິງຫາ 2016. ຈຶ່ງຂໍຖືເປັນກຽດຢ່າງສູງ ສະເໜີມາຍັງທ່ານ ເຈົ້າແຂວງ ພິຈາລະນາແລ້ວສະເໜີຕໍ່ ທ່ານລັດຖະມົນຕີກະຊວງພາຍໃນ ເພື່ອອອກຂໍ້ຕົກລົງ ອະນຸມັດການກໍ່ສ້າງສາສະນະສະຖານ (ວັດ) ບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຕາມລະບຽບການດ້ວຍ.

ເຊັນແທນຫົວໜ້າພະແນກ

ຮອງຫົວໜ້າພະແນກ

ພະແນກພາຍໃນ ແຂວງເຊກອງ

ສາຍສະໝອນ ພົມທັກສິນ

ບ່ອນນຳສົ່ງ:

1. ຫ້ອງວ່າການແຂວງ 1 ສະບັບ;
2. ພະແນກພາຍໃນແຂວງ 1 ສະບັບ;
3. ຂະແໜງຄຸ້ມຄອງພົນລະເມືອງ,ຊົນເຜົ່າ ແລະສາສະໜາ 1 ສະບັບ;
4. ເກັບຮັກສາໄວ້ 1 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ພະແນກ ຖວທ ແຂວງ

ເລກທີ 37 /ຖວທ,ຊກ

ເຊກອງ, ວັນທີ 17.1.2019

ໃບຢັ້ງຢືນ

ຂອງພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ ວ່າດ້ວຍ ເຫັນດີການກໍ່ສ້າງສາສະໜາສະຖານວັດບ້ານ ແກ້ງກຸຍ ເມືອງກະລຶມ ແຂວງເຊກອງ

- ອີງຕາມ: ກົດໝາຍມໍຣະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013.
- ອີງຕາມ: ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກເລກທີ 95 /ນຍ, ລົງວັນທີ 9 ມີນາ 2017
- ອີງຕາມ: ດຳລັດ ສະບັບເລກທີ 315 /ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ການປົກປ້ອງເຄື່ອນໄຫວສາສະໜາຢູ່ ສປປ ລາວ.
- ອີງຕາມ: ໜັງສືສະເໜີ ຂອງອົງການຈັດຕັ້ງບ້ານ ແກ້ງກຸຍ ເມືອງກະລຶມ ແຂວງເຊກອງ ສະບັບເລກທີ 01 /ນບ, ລົງວັນທີ 24 / ທັນວາ /2018. ວ່າດ້ວຍການສ້າງຕັ້ງສາສະໜາສະຖານໃໝ່ (ສ້າງຕັ້ງວັດໃໝ່).

ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເຫັນດີເປັນເອກະພາບນຳອົງການປົກຄອງທ້ອງຖິ່ນບ້ານ ແກ້ງກຸຍ ເມືອງກະລຶມ ແຂວງເຊກອງ ແລະ ພາກສ່ວນທີ່ກ່ຽວຂ້ອງເຫັນວ່າຖືກຕ້ອງ ແລະ ສອດຄ່ອງກັບລະບຽບຫຼັກການ ທີ່ລະບຸໄວ້ຢູ່ໝວດທີ I, ໃນມາດຕາ: 33 ຂອງກົດໝາຍມໍຣະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 44/ສພຊ, ລົງວັນທີ 24 ທັນວາ 2013 ແລະ ໃນມາດຕາ: 17 ຂອງດຳລັດວ່າດ້ວຍການຄຸ້ມຄອງ ແລະ ການປົກປ້ອງເຄື່ອນໄຫວສາສະໜາຢູ່ ສປປ ລາວ, ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016, ສ່ວນຮູບຊົງການກໍ່ສ້າງສາສະໜາສະຖານ ເປັນຕົ້ນ: ກຸຕິ, ຫໍແຈກ, ສາລາໂຮງທຳ, ຫໍກອງ, ສິມ, ປະຕູໂຂງ, ກຳແພງລ້ອມ, ສະລາພັກ,ການປະດັບຕົບແຕ່ງສີລະປະລວດລາຍພາຍໃນ,ພາຍນອກ,ການຜະລິດ ແລະ ນຳເຂົ້າ,ພະພຸດທະຮູບ,ຫໍພະເມມ,ຫໍພະພູມ ແມ່ນໃຫ້ມາຜ່ານ ແລະ ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອປະຕິບັດຕາມນິຕິກຳຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຖືກຕ້ອງຕາມວັດທະນະທຳອັນດີງາມຂອງຊາດ.

ດັ່ງນັ້ນ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຈຶ່ງໄດ້ຢັ້ງຢືນການກໍ່ສ້າງສາສະໜາສະຖານວັດດັ່ງກ່າວໂດຍອີງໃສ່ເອກະສານເຫັນດີຖືກຕ້ອງຄົບຖ້ວນສາມາດກໍ່ສ້າງໄດ້ ແລະ ຖືກຕ້ອງຕາມກົດໝາຍ.

ຫົວໜ້າພະແນກ

ພະແນກ ຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ

ປູ່ໄຊ ໄຊຍະເສນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ພະແນກ ຍທຂ ແຂວງເຊກອງ

ເລກທີ 121 /ຍທຂ

ເຊກອງ,ວັນທີ 25/11/2019

ໜັງສືຢັ້ງຢືນ

ການກຳນົດສະຖານທີ່ຕັ້ງໂຄງການກໍ່ສ້າງອາຄານສາສະໜາສະຖານ (ວັດ ບ້ານ: ແກ້ງກຸຍ)

- **ອີງຕາມ:** ຄຳແນະນຳ ຂອງກະຊວງພາຍໃນ ສະບັບເລກທີ: 16/ພນ, ລົງວັນທີ: **09 ພະຈິກ 2016** ກ່ຽວກັບ ການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍ: ການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນ ໄຫວສາສະໜາ ຢູ່ ສປປ ລາວ.
- **ອີງຕາມ:** ຂໍ້ຕົກລົງຂອງລັດຖະມົນຕີກະຊວງ ຍທຂ ສະບັບເລກທີ: **19145/ຍທຂ,** ລົງວັນທີ: **24/08/2018,** ວ່າດ້ວຍ: ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ ຍທຂ ແຂວງ ແລະ ນະຄອນຫຼວງ.
- **ອີງຕາມ:** ໜັງສືສະເໜີຂອງພະແນກພາຍໃນ ສະບັບເລກທີ: **05/ພນ. ຊກ,** ລົງວັນທີ: **08 ມັງກອນ 2019,** ວ່າດ້ວຍ: ອອກໃບຢັ້ງຢືນເພື່ອປະກອບເອກະສານ ສະເໜີກໍ່ສ້າງ ສະຖານທີ່ອາຄານສາສະນະສະຖານ (ວັດ) ບ້ານແກ້ງກຸຍ ເມືອງກະລຶມ.
- **ອີງຕາມ:** ບົດບັນທຶກກອງປະຊຸມຂອງອຳນາດການປົກເມືອງກະລຶມ ແລະ ບ້ານ ສະບັບເລກທີ: **01/ນບ,** ລົງວັນທີ: **01/12/2018** ວ່າດ້ວຍ: ເຫັນດີໃຫ້ມີການກໍ່ສ້າງວັດ ຢູ່ບ້ານ ແກ້ງກຸຍ ເຂດສະບານ ເມືອງກະລຶມ.

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງເຊກອງຢັ້ງຢືນ

ໃຫ້ແກ່ອຳນາດການປົກຄອງເມືອງກະລຶມ ກ່ຽວກັບການກຳນົດສະຖານທີ່ຕັ້ງ ໂຄງການກໍ່ສ້າງອາຄານເປັນບ່ອນກາບໄຫ້ວສັກກາລະບູຊາ ທຳພິທີທາງດ້ານສາສະໜາ ຕາມຮີດຄອງປະເພນີຂອງລາວ ຢູ່ໃນເຂດບ້ານແກ້ງກຸຍ ເມືອງກະລຶມ ເພື່ອຈັດວາງບັນດາກິດຈະການ ໃນການກໍ່ສ້າງວັດ ໂດຍອີງຕາມ ໃບແຈ້ງທີ່ດິນ ສະບັບລົງວັນທີ: **26/11/2018** ໃນຂອບເຂດເນື້ອທີ່ **4.1 ຮຕ** ເຫັນວ່າມີຄວາມເໝາະສົມ ແລະ ມອບໃຫ້ອຳນາດການປົກຄອງເມືອງເປັນຜູ້ຈັດຕັ້ງປະຕິບັດປັກຫຼັກໝາຍເຂດຕອນດິນດັ່ງກ່າວ ຕາມແຜນຜັງເມືອງກຳນົດໄວ້ໃນເມື່ອກ່ອນຢ່າງສອດຄ່ອງ.

ດັ່ງນັ້ນ, ຈຶ່ງໄດ້ສ້າງເອກະສານຢັ້ງຢືນສະບັບນີ້ໄວ້ ເພື່ອເປັນຫຼັກຖານໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ

ພະແນກ ໂຍທາທິການ ແລະຂົນສົ່ງ ແຂວງເຊກອງ

ສຸດສະນະ ສີຫາວົງ

ແຜນຜັງກຳນົດຈຸດທີ່ຕັ້ງວັດ

ຂອບເຂດປ່າ ສະຫງວນ 350 ຮຕ



ແຜນຜັງການກຳນົດເຂດສະຫງວນ ແລະ ການຈັດສັນໃນຕົວເມືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ຄະນະກຳມະການແນວລາວສ້າງຊາດແຂວງ

ເລກທີ 214...../ຄນຊຂ

ເຊກອງ, ວັນທີ 07.06.2019

ໃບຢັ້ງຢືນ

ຂອງຄະນະກຳມະການແນວລາວສ້າງຊາດແຂວງເຊກອງ

- **ອີງຕາມ:** ກົດໝາຍ ວ່າດ້ວຍ ແນວລາວສ້າງຊາດ, ໝວດທີ II, ມາຕາ 8 ແລະ ມາດຕາ 9, ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງແນວລາວສ້າງຊາດ.
- **ອີງຕາມ:** ດຳລັດຂອງລັດຖະບານ, ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016, ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາ ຢູ່ ສປປ ລາວ ໃນໝວດທີ 6, ມາດຕາ 32.
- **ອີງຕາມ:** ໜັງສືສະເໜີຂອງແນວລາວສ້າງຊາດເມືອງກະລຶມ, ສະບັບເລກທີ 45/ຄນຊມ, ລົງວັນທີ 6 ມິຖຸນາ 2019 ຂໍສະເໜີສ້າງຕັ້ງວັດຢູ່ເມືອງກະລຶມ.
- **ອີງຕາມ:** ໜັງສືສະເໜີຂອງອົງການຈັດຕັ້ງ ບ້ານແກ້ງກຸຍ, ເມືອງກະລຶມ, ແຂວງເຊກອງ ສະບັບເລກທີ 01/ນບ, ລົງວັນທີ 24 ທັນວາ 2018 ວ່າດ້ວຍການສ້າງຕັ້ງສາສະໜາສະຖານໃຫມ່ (ສ້າງວັດໃໝ່).

ຄະນະກຳມະການແນວລາວສ້າງຊາດແຂວງເຊກອງ ເຫັນດີເປັນເອກະພາບຕາມການນຳອົງການປົກຄອງທ້ອງຖິ່ນ, ຄະນະກຳມະການແນວລາວສ້າງຊາດເມືອງກະລຶມ, ໃນການສ້າງຕັ້ງກໍ່ສ້າງສາສະນະສະຖານ (ສ້າງວັດໃຫມ່ ບ້ານແກ້ງກຸຍ, ເມືອງກະລຶມ, ແຂວງເຊກອງ) ໂດຍໄດ້ປະຕິບັດຖືກຕ້ອງຕາມດຳລັບ 315/ລບ, ລະບຽບກົດໝາຍ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງກັບວຽກງານສາສະໜາ ເພື່ອເປັນການປົກປັກຮັກສາພຸດທະສາສະໜາ ໃຫ້ຄຽງຄູ່ກັບສັງຄົມລາວຕະຫຼອດໄປ.

ດັ່ງນັ້ນ: ຄະນະການະການແນວລາວສ້າງຊາດແຂວງເຊກອງ ຈິ່ງໄດ້ຢັ້ງຢືນເຫັນດີຕາມການກະກຽມເງື່ອນໄຂຮອບດ້ານເຫັນວ່າຖືກຕ້ອງສອດຄອງ ຕາມລະບຽບກົດໝາຍສາມາດສ້າງຕັ້ງໄດ້.

ຄະນະກຳມະການແນວລາວສ້າງຊາດແຂວງ

ປະທານ

ນ. ບຸນຮອງ ບຸນຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການພຸດທະສາສະໜາສັມພັນລາວ

ແຂວງ ເຊກອງ

ເລກທີ...069.../ອພສ

ລົງວັນທີ...05/06/2019

ໜັງສືສະເໜີ

ນ້ອມນະມັດສະການ: ພຣະອາຈາຣຍ໌ໃຫຍ່ ຫົວໜ້າຫ້ອງການບໍລິຫານງານສູນກາງ ອພສ ທີ່ເຄົາລົບນັບຖືຢ່າງສູງ

ເລື່ອງ: ການສະເໜີກໍ່ສ້າງ, ສ້າງຕັ້ງວັດໃໝ່ຢູ່ເມືອງ ກະລຶມ ແຂວງ ເຊກອງ

-ອີງຕາມ: ທັມມະນູນສົງລາວ ສະບັບປັບປຸງ ພສ 2561 ສະບັບເລກທີ 37/ນຍ ລົງວັນທີ 15 ກຸມພາ 2019 ໝວດທີ 5 ມາດຕາ 40 ວ່າດ້ວຍ ສິດ ແລະ ໜ້າທີ່ຂອງເຈົ້າຄະນະ ອພສ ແຂວງ.

-ອີງຕາມ: ດຳລັດ ສະບັບເລກທີ 315/ລບ ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ

-ອີງຕາມ: ໜັງສືສະເໜີຂອງທ່ານເຈົ້າເມືອງ-ເມືອງກະລຶມ ສະບັບເລກທີ 240/ຈມ.ກລ, ລົງວັນທີ 27 ທັນວາ 2018 ວ່າດ້ວຍການກໍ່ສ້າງ, ສ້າງຕັ້ງວັດຢູ່ເມືອງກະລຶມ.

-ອີງຕາມ: ມະຕິກອງປະຊຸມເຈົ້າຄະນະ ອພສ ແຂວງ ຄັ້ງວັນທີ 02 ມິຖຸນາ 2019 ວ່າດ້ວຍການກໍ່ສ້າງ,ສ້າງຕັ້ງວັດໃໝ່ຢູ່ເມືອງກະລຶມ.

ເຈົ້າຄະນະ ອົງການພຸດທະສາສະໜາສັມພັນລາວ ແຂວງເຊກອງ ຂໍນ້ອມນະມັດສະການມາຍັງ ພຣະອາຈາຣຍ໌ໃຫຍ່ ຫົວໜ້າຫ້ອງການບໍລິຫານງານ ສູນກາງ ອົງການພຸດທະສາສະໜາສັມພັນ ແຫ່ງ ສປປ ລາວ ເພື່ອຮັບຊາບວ່າ ເຈົ້າຄະນະ ອພສ ແຂວງເຊກອງ ພ້ອມດ້ວຍອົງການຈັດຕັ້ງເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນ ບ້ານເທດສະບານ ຈະໄດ້ກໍ່ສ້າງ,ສ້າງຕັ້ງວັດໃໝ່ຢູ່ເມືອງກະລຶມ

ດັ່ງນັ້ນ ຈຶ່ງໄດ້ນ້ອມນະມັດສະການ ສະເໜີມາຍັງທ່ານ ພຣະອາຈາຣຍ໌ໃຫຍ່ ຫົວໜ້າຫ້ອງການບໍລິຫານງານ ສູນກາງ ອພສ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ອະນຸຍາດຕາມເຫັນສົມຄວນດ້ວຍ.

ອົງການພຸດທະສາສະໜາສັມພັນລາວແຂວງເຊກອງ

ເຈົ້າຄະນະ ອພສ ແຂວງ

ແຂວງ ເຊກອງ

ພຣະອາຈາຣຍ໌ ບຸນໂຖ້ຍ ໄຊຍະບຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການພຸດທະສາສະໜາສໍາພັນລາວ
ແຂວງເຊກອງ

ເລກທີ...068.........../ອພສ
ລົງວັນທີ...05.../...06.../2019

ຂໍ້ຕົກລົງ

ຂອງເຈົ້າຄະນະ ອພສ ແຂວງ ເຊກອງ ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຮັບຜິດຊອບ ໃນການລົງເຄື່ອນໄຫວການກໍ່ສ້າງ, ສ້າງຕັ້ງວັດໃໝ່ຢູ່ເມືອງກະລຶມ

-ອີງຕາມ: ທໍາມະນູນສົງລາວ ສະບັບເລກທີ 37/ນຍ ລົງວັນທີ 15ກຸມພາ 2019 ໝວດທີ 5 ມາດຕາ 40 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າຄະນະແຂວງ

-ອີງຕາມ: ໜັງສືສະເໜີຂອງທ່ານເຈົ້າເມືອງ-ເມືອງກະລຶມ ສະບັບເລກທີ 240/ຈມ.ກລ, ລົງວັນທີ 27ທັນວາ2018 ວ່າດ້ວຍການກໍ່ສ້າງ, ສ້າງຕັ້ວັດຢູ່ເມືອງກະລຶມ.

-ອີງຕາມ: ກອງປະຊຸມເຈົ້າຄະນະ ອພສ ແຂວງ ຄັ້ງວັນທີ 02ມິຖຸນາ 2019 ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການຮັບຜິດຊອບໃນການລົງເຄື່ອນໄຫວ ກໍ່ສ້າງ,ສ້າງຕັ້ງວັດຢູ່ເມືອງກະລຶມ.

ມາດຕາ 01 : ເຫັນດີແຕ່ງຕັ້ງຄະນະກໍາມະການຮັບຜິດຊອບໃນການລົງເຄື່ອນໄຫວກໍ່ສ້າງວັດ ມີດັ່ງລຸ່ມນີ້:

1. ພຣະອາຈາຣຍ໌ປຸ່ ສົມສະໜຸກ ບຸດຕາລາດ ຮອງເຈົ້າຄະນະແຂວງ ຫົວໜ້າກໍາມາທິການ ສຫລນປກ ເປັນຫົວໜ້າ
2. ພຣະອາຈາຣຍ໌ ຊາ ສີດາລາ ຄະນະ ອພສ ແຂວງ, ຄະນະກໍາມາທິການ ສຫລນປກ ເປັນຮອງ
3. ພຣະອາຈາຣຍ໌ ສົມສຸກ ວັດທະນະທໍາ ຄະນະ ອພສ ແຂວງ ຄະນະຫ້ອງການ ອພສ ແຂວງ ເປັນຄະນະ
4. ພຣະອາຈາຣຍ໌ ບົວວັນ ມະນີຈັນ ຄະນະ ອພສ ແຂວງ ຄະນະກໍາມາທິການເຜີຍແຜ່ສິລະທັມ ເປັນຄະນະ
5. ພຣະອາຈາຣຍ໌ ສີຖານ ທໍາມະສິດ ຄະນະ ອພສ ແຂວງ ຄະນະກໍາມາທິການສຶກສາສົງ ເປັນຄະນະ

+ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະລົງເຄື່ອນໄຫວກໍ່ສ້າງ, ສ້າງຕັ້ງວັດຢູ່ເມືອງ ກະລຶມ.

- ປະຕິບັດແບບແຜນວິທີເຮັດວຽກ ແມ່ນລວມສູນປະຊາທິປະໄຕ ເຮັດວຽກເປັນໝູ່ຄະນະ ແບ່ງຄວາມຮັບຜິດຊອບໃຫ້ກັນຢ່າງຈະແຈ້ງໃນການກະກຽມດໍາເນີນວຽກງານຕ່າງໆ.
- ຄົນຄ້ວາຊີ້ນໍາ-ນໍາພາຕິດຕາມກວດກາ ແລະ ຊຸກຍູ້, ລົງເລິກໃນທຸກວຽກງານຂອງການກໍ່ສ້າງ, ສ້າງຕັ້ງວັດຕາມໜ້າທີ່ຄວາມຮັບຜິດຊອບຂອງຕົນເພື່ອໃຫ້ມີຜົນດີ ແລະ ໄດ້ຮັບຜົນສໍາເລັດ.
- ຄົ້ນຄ້ວາພິຈາລະນາບັນຫາຕ່າງໆ ໃຫ້ທັນເວລາ,ສອດຄ່ອງຕາມຄວາມເປັນຈິງ,ຈະແຈ້ງເປັນເອກະພາບກັນໃນຄະນະ
- ປະຕິບັດໜ້າທີ່ອື່ນໆ ຕາມຄວາມເປັນຈິງ ໃນເວລາດໍາເນີນວຽກຕົວຈິງ

ມາດຕາ 02 : ບັນດາພຣະສົງທີ່ຖືກແຕ່ງຕັ້ງນີ້ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 03 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດນໍາໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ອົງການພຸດທະສາສະໜາສໍາພັນລາວແຂວງເຊກອງ
ເຈົ້າຄະນະ ອພສ ແຂວງ

ພຣະອາຈາຣຍ໌ ບຸນໂຖ້ຍ ໄຊຍະບຸດ

ກະຊວງພາຍໃນ
ກົມກຸ່ມງານຊົນເຜົ່າແລະສາສະໜາ
ຂາເຂົ້າ ເລກທີ 205
ວັນທີ 18.7.19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ພະແນກພາຍໃນແຂວງ

ເລກທີ 171 /ພນ.ຊກ

ເຊກອງ, ວັນທີ 12 ກໍລະກົດ 2019

ສະໂໜດນຳສົ່ງ

ຮຽນ: ທ່ານຫົວໜ້າກົມຊົນເຜົ່າ ແລະ ສາສະໜາ ທີ່ນັບຖືຢ່າງສູງ!

ເລື່ອງ: ສະເໜີສ້າງຕັ້ງສາສະນະສະຖານ ວັດບ້ານແກ້ງກຸຍ ເມືອງກະລຶມ.

ເອກະສານທີ່ສົ່ງມາມີ:

ລ/ດ	ເນື້ອໃນຫຍໍ້ຂອງເອກະສານ	ຈຳນວນ
I	ເອກະສານ ຂັ້ນແຂວງ	
1	ໜັງສືສະເໜີ ຂອງ ທ່ານເຈົ້າແຂວງ	1 ສະບັບ
2	ບົດລາຍງານ ຜົນສຳກ່ຽວກັບຂັ້ນຕອນ ລະບຽບຫຼັກການ ຂອງການປະກອບເອກະສານກໍ່ສ້າງສາສະນະສະຖານ	1 ສະບັບ
3	ໜັງສືສະເໜີ ຫົວໜ້າພະແນກພາຍໃນແຂວງ	1 ສະບັບ
4	ໜັງສືຢັ້ງຢືນ ຄະນະກຳມະການແນວລາວສ້າງຊາດແຂວງ	1 ສະບັບ
5	ໜັງສືຢັ້ງຢືນ ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວແຂວງ.	1 ສະບັບ
6	ໜັງສືຢັ້ງຢືນ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ	1 ສະບັບ
7	ໃບຕາດິນວັດ,ຢັ້ງຢືນຈາກພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ	1 ສະບັບ
8	ໜັງສືສະເໜີ ຂອງອົງການພຸດທະສາສະໜາສຳພັນລາວແຂວງເຊກອງ	1 ສະບັບ
9	ຂໍ້ຕົກລົງ ຄະນະກຳມະການຮັບຜິດຊອບການລົງເຄື່ອນໄຫວການກໍ່ສ້າງ ອພສ ແຂວງ	1 ສະບັບ
II.	ເອກະສານ ຂັ້ນເມືອງ	
1	ໜັງສືສະເໜີ ຂອງ ທ່ານເຈົ້າເມືອງກະລຶມ	1 ສະບັບ
2	ຂໍ້ຕົກລົງຂອງທ່ານເຈົ້າເມືອງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບຊີ້ນຳການກໍ່ສ້າງວັດ ຢູ່ເຂດສະບານເມືອງກະລຶມ	1 ສະບັບ

3	ໜັງສືສະເໜີ ຫົວໜ້າຫ້ອງການພາຍໃນເມືອງກະລຶມ	1 ສະບັບ
4	ໜັງສືສະເໜີ ປະທານແນວລາວສ້າງຊາດເມືອງກະລຶມ	1 ສະບັບ
5	ໃບຢັ້ງຢືນ ຂອງຫົວໜ້າຫ້ອງການ ຍທຂ ເມືອງກະລຶມ	1 ສະບັບ
6	ໃບຄິດໄລ່ປະເມີນລາຄາຫົວໜ້າຫ້ອງການ ຍທຂ ເມືອງ	1 ສະບັບ
7	ໃບຢັ້ງຢືນ ຫົວໜ້າຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ	1 ສະບັບ
III.	ເອກະສານ ຂັ້ນບ້ານ	
1	ໃບສະເໜີ ຄະນະປົກຄອງບ້ານແກ້ງກຸຍ	1 ສະບັບ
2	ໜັງສືສະເໜີ ນາຍບ້ານ-ບ້ານແກ້ງກຸຍ	1 ສະບັບ
3	ບົດບັນທຶກກອງປະຊຸມຂອງອຳນາດການປົກຄອງບ້ານເຫດສະບານເມືອງ	1 ສະບັບ
4	ບົດວິພາກການກໍ່ສ້າງສາສະນະສະຖານ ຂອງການຈັດຕັ້ງສາສະໜາ	1 ສະບັບ
5	ບົດບັນທຶກກອງປະຊຸມ ການຄົ້ນຄ້ວາປຶກສາຫາລືກ່ຽວກັບການກໍ່ສ້າງສາສະນະສະຖານ (ວັດ) ຢູ່ບ້ານແກ້ງກຸຍ	1 ສະບັບ
	ລວມທັງໝົດ:	21 ສະບັບ

ຫົວໜ້າພະແນກ

ພະແນກ ພາຍໃນ ແຂວງເຊກອງ

ບ. ສີພະທອງ ແກ້ວດວງດີ

ໃບກົດສຳພັນ

ຂາເຂົ້າເລກທີ.....76.....ລົງວັນທີ.....18...../.....07...../.....2019.

ເອກະສານເລກທີ:.....51/[illegible] ຊກ.....ລົງວັນທີ.....10...../.....07...../.....2019.

ມາຈາກພາກສ່ວນ: ພະແນກ ພາຍໃນ ແຂວງ ຊຽງຂວາງ.

ເລື່ອງ: [illegible]

[illegible] ເມືອງ [illegible] ແຂວງ ຊຽງຂວາງ.

....

ຂາເຂົ້າ-ຂາອອກ,ວັນທີ.....18/.....07...../2019.

[illegible]

ຄຳເຫັນຂອງຫົວໜ້າພະແນກ:

[illegible]

....

ນະຄອນຫຼວງວຽງຈັນ, ວັນທີ ....

ຫົວໜ້າພະແນກ

[illegible]

ພະແນກພາຍໃນ
ແຂວງເຊກອງ
ເລກທີ 664
ວັນທີ 31.12.18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງກະລືມ

ຫ້ອງການພາຍໃນ

ເລກທີ 445/ຫພມ

ວັນທີ 24 DEC 2018

ໜັງສືສະເໜີ

ຮຽນ: ທ່ານ ເຈົ້າເມືອງ-ເມືອງກະລຶມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

(ໂດຍຜ່ານອົງການຈັດຕັ້ງທີ່ກ່ຽວຂ້ອງທຸກຂັ້ນ)

ເລື່ອງ: ສະເໜີ ສ້າງຕັ້ງວັດ ຢູ່ເທດສະບານເມືອງກະລຶມ ໜຶ່ງວັດ

-ອີງຕາມ: ດຳລັດ ເລກທີ 315/ລບ, ລົງວັນທີ 16/8/2016 ວ່າດ້ວຍການຄຸ້ມຄອງ ແລະປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.

-ອີງຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງພາຍໃນ ສະບັບເລກທີ 252/ພນ, ລົງວັນທີ 15 ພຶດສະພາ 2012 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການພາຍໃນເມືອງ.

-ອີງຕາມ: ໜັງສືສະເໜີຂອງອຳນາດການປົກຄອງບ້ານທັງ 5 ໝູ່ບ້ານ ເທດສະບານເມືອງກະລຶມ ສະບັບເລກທີ 1/ ນບ, ລົງວັນທີ 24/12/2018 ວ່າດ້ວຍສະເໜີກໍ່ສ້າງວັດ ຢູ່ບ້ານ ເທດສະບານເມືອງ ໜຶ່ງວັດ.

ຫ້ອງການພາຍໃນເມືອງກະລຶມ

ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ:ເຈົ້າເມືອງ-ເມືອງກະລຶມ ເພື່ອຄົ້ນຄວ້າພິຈາລະນານຳສະເໜີຕໍ່ໃຫ້ຫົວໜ້າພະແນກພາຍໃນແຂວງເຊກອງ ເພື່ອອອກໜັງສືສະເໜີໃຫ້ຂັ້ນເທິງ ການກໍ່ສ້າງຕັ້ງວັດຢູ່ເທດສະບານເມືອງກະລຶມ ແຂວງ ເຊກອງ, ໃຫ້ຖືກຕ້ອງສອດຄ່ອງກັບລະບຽບຫຼັກການກຳນົດໄວ້.

ສະນັ້ນ, ຫ້ອງການພາຍໃນເມືອງກະລຶມ, ຈິ່ງຮຽນສະເໜີມາຍັງ ທ່ານ ເຈົ້າເມືອງ-ເມືອງກະລຶມ ພິລະນາຄົ້ນຄວ້າຕາມຄວາມເໝາະສົມຄວນດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)

ຫົວໜ້າຫ້ອງການພາຍໃນເມືອງກະລຶມ

ຫ້ອງການ ພາຍໃນ ເມືອງກະລຶມ

ສຸລີວັນ ແກ້ວດານອນ

ສາທາລະນລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງ ກະລຶມ
ເລກທີ 674
ລົງວັນທີ 26 DEC 2018

ເມືອງກະລຶມ

ເຈົ້າເມືອງ

ເລກທີ 240 ຈມ.ກລ.

ກະລຶມ, ວັນທີ 27 DEC 2018

ໜັງສືສະເໜີ

ຮຽນ: ທ່ານ ຫົວໜ້າພະແນກພາຍໃນ ແຂວງເຊກອງ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

ເລື່ອງ: ສະເໜີ ກໍ່ສ້າງ, ສ້າງຕັ້ງ (ວັດ) ຢູ່ເມືອງກະລຶມ.

-ອີງຕາມ: ກົດໝາຍ ການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ IV ມາດຕາ 39- 40 ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ.

-ອີງຕາມ: ດຳລັດ ຂອງນາຍົກລັດຖະມົນຕີ, ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍ ການຄຸ້ມຄອງ ແລະ ການປົກປ້ອງ, ການເຄື່ອນໄຫວສາສະໜາຢູ່ ສປປ ລາວ.

-ອີງໃສ່: ໜັງສືສະເໜີ ຂອງຫ້ອງການພາຍໃນເມືອງ, ສະບັບເລກທີ 450/ພນມ, ລົງວັນທີ 24/12/2018.

ເຈົ້າເມືອງກະລຶມ ຂໍຖືເປັນກຽດ ຮຽນສະເໜີມາຍັງ ທ່ານ ຫົວໜ້າ ພະແນກພາຍໃນ ແຂວງເຊກອງ ເພື່ອກໍ່ສ້າງ, ສ້າງຕັ້ງວັດ ຢູ່ເມືອງກະລຶມ, ໃຫ້ຖືກຕ້ອງສອດຄ່ອງກັບລະບຽບຫຼັກການທີ່ກຳນົດໄວ້.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຄົ້ນຄວ້າ ແລະ ພິຈາລະນາແກ້ໄຂຕາມທາງຄວນດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)

ເຈົ້າເມືອງ

(ຜູ້ປະຈຳການ)

ບົວເງິນ ພຽນດາວັນ

Bouangern PHIENDAVANH

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເມືອງກະລຶມ

ເຈົ້າເມືອງ

ເລກທີ 456 /ຈມ

ກະລຶມ, ວັນທີ 29 SEP 2017

ຂໍ້ຕົກລົງ

ຂອງທ່ານເຈົ້າເມືອງ

ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບຊີ້ນຳວຽກງານກ່ຽວກັບການກໍ່ສ້າງວັດ ຢູ່ເຂດສະບານເມືອງກະລຶມ

- **ອີງຕາມ:** ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ລະບຸໄວ້ໃນ ພາກທີ IV ໝວດທີ 4 ມາດຕາ 39 – 40 ວ່າດ້ວຍ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ.
- **ອີງຕາມ:** ດຳລັດ ສະບັບເລກທີ 315/ລບ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.
- **ອີງຕາມ:** ໜັງສືສະເໜີ ຂອງຫ້ອງການພາຍໃນເມືອງ ສະບັບເລກທີ 478/ຫພມ, ລົງວັນທີ 25.9.2017 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຮັບຜິດຊອບຊີ້ນຳວຽກງານກ່ຽວກັບການກໍ່ສ້າງວັດຢູ່ເຂດສະບານເມືອງກະລຶມ.

ເຈົ້າເມືອງ - ເມືອງກະລຶມຕົກລົງ

ມາດຕາ 1: ເຫັນດີແຕ່ງຕັ້ງ ຄະນະກຳມະການຮັບຜິດຊອບຊີ້ນຳວຽກງານກ່ຽວ ກັບການກໍ່ສ້າງວັດ ຢູ່ເຂດສະບານເມືອງກະລຶມ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ນາງ ມະນີສອນ ປຽງສະຫວັນ ຄະນະປະຈຳພັກເມືອງ ປະທານແນວລາວສ້າງຊາດ ເປັນປະທານ.
2. **ທ່ານ ສອນເພັດ ສອນສຸພັນ ກຳມະການພັກເມືອງ ຫົວໜ້າຫ້ອງການພາຍໃນເມືອງ ເປັນຮອງປະທານ.**
3. ທ່ານ ຄຳປະເສີດ ດອຍບົວລະພາ ກຳມະການພັກເມືອງ ຫົວໜ້າຫ້ອງການໂຍທາທິການ

ແລະ ຂົນສົ່ງ ເມືອງ ເປັນຮອງປະທານ.

4. ທ່ານ ສຸດສັກສິດ ຍົດແສນຫວັງ ກຳມະການພັກເມືອງ ຫົວໜ້າຫ້ອງການຖະແຫຼງຂ່າວ, ວັດ ທະນະທຳ ແລະ ທ່ອງທ່ຽວ ເມືອງ ເປັນກຳມະການ.
5. ທ່ານ ພູສະຫວັນ ໄຊຍະວົງ ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນກຳມະການ.
6. ທ່ານ ພັຕ ສົມໃຈ ວົງພະລົງ ຮອງເລຂາຄະນະພັກຮາກຖານ ຫົວໜ້າການທະຫານກອງບັນຊາການ ປ ກ ຊ ເມືອງ ເປັນກຳມະການ.
7. ທ່ານ ພັຕ ສອນໄຫວ ດາລາສິນ ຮອງເລຂາຄະນະພັກຮາກຖານ ຮອງຫົວໜ້າກອງບັນຊາການ ປ ກ ສ ເມືອງ ເປັນກຳມະການ.

ມາດຕາ 2: ແຕ່ງຕັ້ງຄະນະກອງເລຂາ. ຜູ້ຊ່ວຍວຽກປະສານງານກ່ຽວກັບວຽກງານ ການກໍ່ສ້າງວັດ ຢູ່ເທດສະບານເມືອງກະລຶມ ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ຄຳຜອຍ ລິນປັນຍາ ຮອງຫົວໜ້າຫ້ອງການພາຍໃນ ເປັນຫົວໜ້າ
2. ທ່ານ ສີສຸພົນ ເສນາວັນນາ ຫົວໜ້າໜ່ວຍງານຄຸ້ມຄອງພົນລະເມືອງ,ຊົນເຜົ່າ ແລະ ສາສະໜາ ເປັນຮອງ
3. ທ່ານ ສາຍລົມ ດາລາສິນ ຮອງຫົວໜ້າຫ້ອງການແນວລາວສ້າງຊາດ ເປັນຮອງ
4. ທ່ານ ສີງຄຳ ເລຂາໜ່ວຍພັກບ້ານແກ້ງກຸຍ ເປັນຄະນະ
5. ທ່ານ ນ ເຊີນ ພະສິດ ເລຂາໜ່ວຍພັກບ້ານແກ້ງກຽນ ເປັນຄະນະ
6. ທ່ານ ວິໄລ ເລຂາໜ່ວຍພັກບ້ານຈູອກ ເປັນຄະນະ
7. ທ່ານ ຄຳເບີ ເລຂາໜ່ວຍພັກບ້ານວັກເໜືອ ເປັນຄະນະ
8. ທ່ານ ບົວໄຂ ເລຂາໜ່ວຍພັກບ້ານວັກໄຕ້ ເປັນຄະນະ

ມາດຕາ 2: ບັນດາທ່ານທີ່ຖືກແຕ່ງຕັ້ງ, ກົມກອງ, ຫ້ອງການ, ຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລ້ວພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງ - ເມືອງກະລຶມ

ບຸນໄທ ບຸດຕະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

໑໑໑໑໑໑໑

ເມືອງກະລຶມ.

ຄະນະກຳມະການແນວລາວສ້າງຊາດ.

ເລກທີ. 0 4 5 /ຄສຊ

ກະລຶມ, ວັນທີ. 05 JUN 2019

ຂາເຂົ້າ

ແນວລາວສ້າງຊາດແຂວງເຊກອງ

ເລກທີ: 225

ວັນທີ: 05.06.2019

ໜັງສືສະເໜີ.

ຂອງປະທານແນວລາວສ້າງຊາດ ເມືອງກະລຶມ.

ວ່າດ້ວຍສະເໜີສ້າງຕັ້ງວັດວາອາຮາມ ຢູ່ເທສະບານ ເມືອງກະລຶມໃໝ່.

- **ຮຽນ:** ທ່ານ ປະທານແນວລາວສ້າງຊາດ ແຂວງເຊກອງ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.
- ເລື່ອງ: ຂໍສະເໜີສ້າງຕັ້ງວັດວາອາຮາມ ຢູ່ເມືອງກະລຶມ.
- ອີງຕາມ: ທິດຊີ້ນຳຂອງຄະນະປະຈຳພັກເມືອງ ຄັ້ງວັນທີ 13 / 06 / 2017.
- ອີງຕາມ: ຄວາມເຫັນດີເຫັນພ້ອມ ຂອງພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນ 5 ໜ່ວຍບ້ານຄື: ບ້ານ ແກ້ງກຸຍ, ບ້ານ ແກ້ງກຽນ, ບ້ານ ວັກເໜືອ, ບ້ານ ວັກໄຕ້ ແລະ ບ້ານ ຈູອກ ເຫັນດີໃຫ້ເມືອງກະລຶມ ສ້າງຕັ້ງວັດວາອາລາມ.
- ອີງຕາມ: ການລົງເກັບກຳຂໍ້ມູນຕົວຈິງ ຂອງໜ່ວຍງານ ຊົນເຜົ່າ, ສາສະໜາ, ຮີດຄອງ ແລະ ອົງການຈັດຕັ້ງສັງຄົມ ຄັ້ງວັນທີ 25 / 05 / 2017 ພາຍໃນ 5 ໜູ່ບ້ານທີ່ຂຶ້ນກັບເທສະບານ ເມືອງກະລຶມ.

ປະທານແນວລາວສ້າງຊາດ ເມືອງກະລຶມ. ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ປະທານແນວລາວສ້າງຊາດແຂວງເຊກອງ ຈົ່ງໄດ້ຄົ້ນຄ້ວາ, ພິຈາລະນາດ້ານງົບປະມານ ແລະ ສະເໜີຫາພາກສ່ວນທີ່ກ່ຽວຂ້ອງຮັບຮູ້, ເພື່ອອະນຸຍາດໃຫ້ເມືອງ ກະລຶມ ສ້າງຕັ້ງວັດວາອາຮາມ. ເພື່ອບໍ່ໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າ ພາຍໃນເມືອງພວກເຮົາ ຫັນໄປນຳໃຊ້ ແລະ ເຊື່ອຖືສາສະ

ໜາອື່ນ. ໃຫ້ເຂົາເຈົ້າຫັນມານຳໃຊ້ ແລະ ເຊື່ອຖືສາສະໜາພຸດໃຫ້ຫຼາຍຂຶ້ນ. ອີກອັນໜຶ່ງ ກໍ່ເພື່ອເຮັດໃຫ້ການເຊື່ອຖືງົມງວາຍຂອງພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນເມືອງພວກເຮົາ ໃຫ້ລຶດໜ້ອຍຖອຍລົງເທື່ອລະນ້ອຍໃນຕໍ່ໜ້າ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຈົ່ງໄດ້ຄົ້ນຄ້ວາ ພິຈາລະນາແກ້ໄຂຕາມເງື່ອນໄຂທີ່ເໝາະສົມດ້ວຍ (ມີບົດລາຍງານຜົນສຳເລັດການລົງເກັບກຳຂໍ້ມູນຄັດຕິດມາພ້ອມ.)

(ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ).

ຄະນະກຳມະການແນວລາວສ້າງຊາດ ເມືອງກະລຶມ.

ປະທານ.

ແນວລາວສ້າງຊາດເມືອງກະລຶມ

ປະທານ

ນາງ ມະນີສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------000-------

ພະແນກ ໂຍທາທິການ ແລະຂົນສົ່ງ ແຂວງເຊກອງ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ

ເລກທີ.....724...../ຍທຂ ,ມລ

ກະລຶມ,ວັນທີ.....26 NOV 2018.....

ໃບຢັ້ງຢືນ

-ອີງຕາມ: ການລົງສຳຫຼວດຕົວຈິງ ຂອງວິຊາການ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງກະລຶມ ພ້ອມກັບບັນດາ ວິຊາການ ຫ້ອງການທີ່ກ່ຽວຂ້ອງ ໃນຄັ້ງ ວັນທີ 7/11/218.

- ໃນການລົງສຳຫຼວດໃນຄັ້ງນີ້ສາມາດກຳນົດລວງຍາວ ແລະ ລວງກ້ວາງດັ່ງລຸ່ມນີ້

- ທິດເໜືອ ຕິດກັບຫ້ວຍປຶງ ມີລວງຍາວ : 250 ແມັດ;
- ທິດໃຕ້ ຕິດກັບດິນປະຊາຊົນມີລວງ ຍາວ : 180 ແມັດ.
- ທິດຕາເວັນອອກຕິດກັບຫ້ວຍປຶງ ມີລວງກ້ວາງທັງໝົດ 191,97 ແມັດ.
- ທິດຕາເວັນຕົກຕິດກັບ ດິນປະຊາຊົນ ມີລວງກ້ວາງທັ້ງ 197,24 ແມັດ.

ເຊິ່ງມີເນື້ອທີ່ດິນບຸກເບີກຈະກໍ່ສ້າງວັດທັ້ງໃນການວັດແທກທັ້ງໝົດຂອງເນື້ອທີ 41,046,276.ມ² ດັ່ງຮູບລຸ່ມນີ້



ດັ່ງນັ້ນ: ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ກະລຶມ ຈິ່ງເຫັນດີຢັ້ງຢືນທີ່ດິນບຸກເບີກປຸກສ້າງວັດ ຕາມການສຳຫຼວດ.

ຫົວໜ້າ

ຫ້ອງການ ຍທຂ ເມືອງກະລຶມ

ຄຳປະເສີດ ດອຍບົວລະພາ

Khampaseuth DOYBUALAPHA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
໙໙໙ ໖ 🕮 ໔ ໙໙໙

ຍທຂ PWT

ເມືອງກະລຶມ
ຫ້ອງການ ໂຍທາທິການ ແລະຂົນສົ່ງ ເມືອງ ກະລຶມ

ເລກທີ: 17 2 5 /ຍທຂ

ກະລຶມ, ວັນທີ: 26 NOV 2018

ໂຄງການ: ບຸກເບີກເນື້ອທີ່ດິນປຸກສ້າງວັດ ເມືອງ ກະລຶມ

ເນື້ອທີທັ້ງໝົດ 141,046,276 ມ2

ໃບຄິດໄລ່ປະເມີນລາຄາ

ລ/ດ	ລາຍການໜ້າວຽກ	ຫົວໜ່ວຍ	ບໍລິມາດ	ລາຄາ	ມູນຄ່າ
1	ບຸກເບີກ ແລະ ຖາກຖາງປ່າບາງ	$ມ^2$	4,200	1,719	7,219,800
2	ດູກລອກໜ້າດິນ 15 ຊມ	$ມ^2$	630	7,327	4,616,010
3	ດິນຕັດ	$ມ^3$	6,300	18,987	119,618,100
4	ລວມ				**131,453,910**

ຂຽນເປັນຕົວໜັງສື: ໜຶ່ງຮ້ອຍສາມສິບແອັດລ້ານ ສີ່ແສນຫ້າສິບສາມພັນ ເກົ້າຮ້ອຍສິບ ກີບ

ຫົວໜ້າ
ຫ້ອງການ ຍທຂ ເມືອງ

ຫົວໜ້າ
ໜ່ວຍງານຄຸ້ມຄອງຂົວ-ທາງ ແລະ ເຄຫາຜັງເມືອງ

ຜູ້ຄິດໄລ

ຄຳປະເສີດ ດອຍບົວລະພາ
Khampaseuth DOYBUALAPHA

ລັດສະໝີ ລີວັນໄຊ
Latsame LYVANESAI

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 124/ຖວທ,ກລ

ເມືອງກະລຶມ

ຫ້ອງການ ຖວທ

ລົງວັນທີ.....25 DEC 2018

ໃບຢັ້ງຢືນ

ຂອງຫ້ອງການຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວເມືອງກະລຶມ

ກ່ຽວກັບຢັ້ງຢືນການສ້າງຕັ້ງວັດ.

- **ອີງຕາມ:** ໜັງສືສະເໜີຂອງນາຍບ້ານແກ້ງກຸຍ ເມືອງກະລຶມ ແຂວງເຊກອງ ສະບັບເລກ 01./ນບ ລົງວັນທີ 24/12/2018. ກ່ຽວກັບການສ້າງຕັ້ງວັດ ຢູ່ເທດສະບານເມືອງກະລຶມ.
- **ອີງຕາມ:** ບົດບັນທຶກກອງປະຊຸມເປັນເອກະພາບຂອງອຳນາດການປົກຄອງບ້ານເທດສະບານເມືອງ ສະບັບເລກທີ 01/ນບ. ລົງວັນທີ 01/12/2018 ກ່ຽວກັບການປຶກສາຫາລືການສ້າງຕັ້ງວັດຢູ່ເມືອງ ກະລຶມ ຈຳນວນ 1 ວັດ.

ຫ້ອງການຖະແຫຼງຂ່າວວັດທະນະທຳແລະທ່ອງທ່ຽວເມືອງກະລຶມ ໄດ້ຢັ້ງຢືນໃຫ້ອຳນາດການປົກຄອງບ້ານເທດສະບານເມືອງວ່າ: ເທດສະບານເມືອງກະລຶມມີ 5 ໝູ່ບ້ານແມ່ນເໝາະສົມ ແລະ ສົມຄວນການສ້າງວັດ ເພື່ອອະນຸລັກຮີດຄອງປະເພນີຂອງຊາດແລະເຜີຍແຜ່ສາສະໜາພຸດໃຫ້ມີທຸກໆເມືອງ.

ສະນັ້ນ,ທາງທາງຫ້ອງການຖະແຫຼງຂ່າວ ວັດທະນະທຳແລະທ່ອງທ່ຽວເມືອງກະລຶມ ຈຶ່ງໄດ້ອອກໃບຢັ້ງຢືນສະບັບນີ້ ເພື່ອສະດວກໃນການຈັດຕັ້ງປະຕິບັດໃນການສ້າງຕັ້ງວັດຢູ່ເມືອງກະລຶມ.

ຊ. ຫົວໜ້າຫ້ອງການ

ຖະແຫຼງຂ່າວ ວັດທະນະທຳແລະທ່ອງທ່ຽວເມືອງກະລຶມ.

ຫ້ອງການ ຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວ ເມືອງກະລຶມ

ສົມດີ ຕົວອັກສອນ

Somdy TOUAANSO

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

໑໑໑໑໑໑

ເມືອງກະລຶມ.
ຄະນະກຳມະການແນວລາວສ້າງຊາດ.

ເລກທີ.045 ແນວຊ
ກະລຶມ, ວັນທີ. 05 JUN 2019

ແນວລາວສ້າງຊາດແຂວງເຊກອງ
ຂາເຂົ້າ
ເລກທີ: 225
ວັນທີ: 05.06.2019

ໜັງສືສະເໜີ.

ຂອງປະທານແນວລາວສ້າງຊາດ ເມືອງກະລຶມ.

ວ່າດ້ວຍສະເໜີສ້າງຕັ້ງວັດວາອາຣາມ ຢູ່ເທສະບານ ເມືອງກະລຶມໃໝ່.

- ຮຽນ: ທ່ານ ປະທານແນວລາວສ້າງຊາດ ແຂວງເຊກອງ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.
- ເລື່ອງ: ຂໍສະເໜີສ້າງຕັ້ງວັດວາອາຣາມ ຢູ່ເມືອງກະລຶມ.

- ອີງຕາມ: ທິດຊີ້ນຳຂອງຄະນະປະຈຳພັກເມືອງ ຄັ້ງວັນທີ 13 / 06 / 2017.
- ອີງຕາມ: ຄວາມເຫັນດີເຫັນພ້ອມ ຂອງພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນ 5 ໜ່ວຍບ້ານຄື: ບ້ານ ແກ້ງກຸຍ, ບ້ານ ແກ້ງກຽນ, ບ້ານ ວັກເໜືອ, ບ້ານ ວັກໄຕ້ ແລະ ບ້ານ ຈູອກ ເຫັນດີໃຫ້ເມືອງກະລຶມ ສ້າງຕັ້ງວັດວາອາລາມ.
- ອີງຕາມ: ການລົງເກັບກຳຂໍ້ມູນຕົວຈິງ ຂອງໜ່ວຍງານ ຊົນເຜົ່າ, ສາສະໜາ, ຮີດຄອງ ແລະ ອົງການຈັດຕັ້ງສັງຄົມ ຄັ້ງວັນທີ 25 / 05 / 2017 ພາຍໃນ 5 ໜ່ວຍບ້ານທີ່ຂຶ້ນກັບເທສະບານ ເມືອງກະລຶມ.

ປະທານແນວລາວສ້າງຊາດ ເມືອງກະລຶມ. ຂໍຖືເປັນກຽດຮຽນສະເໜີມາຍັງ ທ່ານ ປະທານແນວລາວສ້າງຊາດແຂວງເຊກອງ ຈົ່ງໄດ້ຄົ້ນຄ້ວາ, ພິຈາລະນາດ້ານງົບປະມານ ແລະ ສະເໜີຫາພາກສ່ວນທີ່ກ່ຽວຂ້ອງຮັບຮູ້, ເພື່ອອະນຸຍາດໃຫ້ເມືອງ ກະລຶມ ສ້າງຕັ້ງວັດວາອາຣາມ. ເພື່ອບໍ່ໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າ ພາຍໃນເມືອງພວກເຮົາ ຫັນໄປນຳໃຊ້ ແລະ ເຊື່ອຖືສາສະ

ໜາອື່ນ. ໃຫ້ເຂົາເຈົ້າຫັນມານຳໃຊ້ ແລະ ເຊື່ອຖືສາສະໜາພຸດໃຫ້ຫຼາຍຂຶ້ນ. ອີກອັນໜຶ່ງ ກໍ່ເພື່ອເຮັດໃຫ້ການເຊື່ອຖືງົມງວາຍຂອງພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນເມືອງພວກເຮົາ ໃຫ້ລົດໜ້ອຍຖອຍລົງເທື່ອລະນ້ອຍໃນຕໍ່ໜ້າ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຈົ່ງໄດ້ຄົ້ນຄ້ວາ ພິຈາລະນາແກ້ໄຂຕາມເງື່ອນໄຂທີ່ເໝາະສົມດ້ວຍ (ມີບົດລາຍງານຜົນສຳເລັດການລົງເກັບກຳຂໍ້ມູນຄັດຕິດມາພ້ອມ.)

(ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ).
ຄະນະກຳມະການແນວລາວສ້າງຊາດ ເມືອງກະລຶມ.
ປະທານ.

ແນວລາວສ້າງຊາດເມືອງກະລຶມ
ປະທານ

ນາງ ມະນີສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------000-------

ພະແນກ ໂຍທາທິການ ແລະຂົນສົ່ງ ແຂວງເຊກອງ

ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ

ເລກທີ 724................./ຍທຂ ,ມລ

ກະລຶມ,ວັນທີ 26 NOV 2018.........

ໃບຢັ້ງຢືນ

-ອີງຕາມ: ການລົງສຳຫຼວດຕົວຈິງ ຂອງວິຊາການ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງກະລຶມ ພ້ອມກັບບັນດາ ວິຊາການ ຫ້ອງການທີ່ກ່ຽວຂ້ອງ ໃນຄັ້ງ ວັນທີ 7/11/218.

- ໃນການລົງສຳຫຼວດໃນຄັ້ງນີ້ສາມາດກຳນົດລວງຍາວ ແລະ ລວງກ້ວາງດັ່ງລຸ່ມນີ້
  - ທິດເໜືອ ຕິດກັບຫ້ວຍປຶງ ມີລວງຍາວ : 250 ແມັດ;
  - ທິດໃຕ້ ຕິດກັບດິນປະຊາຊົນມີລວງ ຍາວ : 180 ແມັດ.
  - ທິດຕາເວັນອອກຕິດກັບຫ້ວຍປຶງ ມີລວງກ້ວາງທັງໝົດ 191,97 ແມັດ.
  - ທິດຕາເວັນຕົກຕິດກັບ ດິນປະຊາຊົນ ມີລວງກ້ວາງທັ້ງ 197,24 ແມັດ.

ເຊິ່ງມີເນື້ອທີ່ດິນບຸກເບີກຈະກໍ່ສ້າງວັດທັ້ງໃນການວັດແທກທັງໝົດຂອງເນື້ອທີ 41,046,276.ມ^2 ດັ່ງຮູບລຸ່ມນີ້



ດັ່ງນັ້ນ: ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ກະລຶມ ຈິ່ງເຫັນດີຢັ້ງຢືນທີ່ດິນບຸກເບີກປຸກສ້າງວັດ ຕາມການສຳຫຼວດ.

ຫົວໜ້າ

ຫ້ອງການ ຍທຂ ເມືອງກະລຶມ

ຄຳປະເສີດ ດອຍບົວລະພາ

Khampaseuth DOYBUALAPHA

/

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເມືອງກະລຶມ

ບ້ານ ເທດສະບານ

ເລກທີ-01--/ນບ

ວັນທີ-24/12/2018

ບົດວິພາກ

ການກໍ່ສ້າງ ສາສະນະສະຖານ

- ອີງຕາມ ດຳລັດຂອງລັດຖະບານ ສະບັບເລກທີ 315 / ລບ, ລົງວັນທີ 16 ສິງຫາ 2016, ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.
- ອີງຕາມ ຄຳແນະນຳຂອງກະຊວງພາຍໃນ ສະບັບເລກທີ 16 / ພນ, ລົງວັນທີ 09 ພະຈິກ 2016,ກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວສາສະໜາຢູ່ ສປປ ລາວ.
- ອີງຕາມ ບົດບັນທຶກ ກອງປະຊຸມກ່ຽວກັບ ຄວາມເຫັນດີເປັນເອກະພາບ ພາຍໃນ 5 ໝູ່ບ້ານ ລົງວັນທີ 1 / 12 / 2018 ວ່າດ້ວຍເຫັນດີກໍ່ສ້າງຕັ້ງວັດ ໜຶ່ງວັດ ຢູ່ເທດສະບານເມືອງກະລຶມ.

I. ປະຫວັດຄວາມເປັນມາ ແລະ ຄວາມຈຳເປັນ.

5 ໝູ່ບ້ານ ເປັນບ້ານໜຶ່ງທີ່ຕັ້ງຢູ່ເທດສະບານເມືອງກະລຶມ ແຂວງເຊກອງ, ມີຈຳນວນພົນລະເມືອງທັງໝົດ 3721 ຄົນ, ຍິງ 2008 ຄົນ, ມີຈຳນວນຄອບຄົວ 721ຄອບຄົວ, ມີຈຳນວນຊົນເຜົ່າ.3 ຊົນເຜົ່າ, ຢູ່ ຮ່ວມກັນ, ໃນເມືອກ່ອນຍັງບໍ່ທັນມີການກໍ່ສ້າງວັດ ເນື່ອງຈາກວ່າໃນໄລຍະຜ່ານມາ ບ້ານຍັງບໍ່ທັນມີຄວາມພ້ອມໃນການກໍ່ສ້າງ. ສະນັ້ນ, ປະຈຸບັນທາງອຳນາດການປົກຄອງທັງ 5 ໝູ່ບ້ານໄດ້ລົງສຳຫຼວດເນື້ອທີ່ດິນປຸກສ້າງ ທີ່ມີຄວາມເໝາະສົມ ແລະ ມີຄວາມເຫັນດີຕົກລົງເປັນເອກະພາບລະຫວ່າງຄະນະໜ່ວຍພັກ ອຳນາດການປົກຄອງບ້ານ ແລະ ປະຊາຊົນພາຍໃນ 5 ໝູ່ບ້ານ ເຫັນດີສະເໜີອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາຂໍອະນຸຍາດໃຫ້ສ້າງວັດຂຶ້ນ.ໜຶ່ງວັດ ຢູ່ເທດສະບານເມືອງກະລຶມ.

II. ຈຸດປະສົງ:

- ເພື່ອນຳພາພໍ່-ແມ່ປະຊາຊົນບັນດາເຜົ່າພາຍໃນບ້ານໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງເຖິງຖອງ ແລະ ເຊື່ອມ ຊຶມຮີດຄອງປະເພນີອັນດີງາມ ຂອງຊາດລາວເຮົາ ໃຫ້ມີຄວາມຍືນຍົງຕະຫຼອດໄປ.
- ເພື່ອຈັດຕັ້ງປະຕິບັດ ເຕົ້າໂຮມຄວາມສາມັກຄີຂອງປະຊາຊົນເຮົາ ແລະ ລູກຫຼານຂອງຕົນໃຫ້ຮູ້ຈັກເຄົາລົບນັບຖື ຮີດຄອງປະເພນີຮູ້ຈັກວຽກງານສາສະໜາ ແລະ ເພື່ອໃຫ້ມີການສ້າງສາພັດທະນາບ້ານ-ເມືອງ ໃຫ້ຢ່າງຖືກຕ້ອງຕາມຫຼັກການຂອງວັດທະນາທຳລາວ.
- ເພື່ອສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີ ປອງດອງຂອງປະປະຊາຊົນບັນດາເຜົ່າ, ສາສະໜາ ແລະ ຊັ້ນຄົນໃນສັງຄົມໃຫ້ມີການປະກອບສ່ວນ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຄວາມຈະເລີນກ້າວໜ້າໃນອະນາຄົດອີກດ້ວຍ.

- ວຽກງານສາສະໜາ ແມ່ນວຽກງານທາງດ້ານຈິດຕະສາດ ທີ່ລະອຽດອ່ອນ, ການເຊື່ອຖືສາສະໜາ ຫຼື ຄວາມເຊື່ອຖືໃດໜຶ່ງ ແມ່ນຄວາມຮຽກຮ້ອງຕ້ອງການ ທາງດ້ານຈິດໃຈ ຂອງປະຊາຊົນລາວບັນດາເຜົ່າ ທີ່ມີມາເປັນເວລາດົນນານສືບເນື່ອງມາຮອດປະຈຸບັນ, ເພື່ອເຮັດໃຫ້ສິດໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາ ຂອງພົນລະເມືອງລາວ ໄດ້ຮັບການຈັດຕັ້ງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ ແຫ່ງ ສປປ ລາວ.

III. ແຫຼ່ງທີ່ມາຂອງດິນ.

- ດິນທີ່ຈະປຸກສ້າງວັດ ແມ່ນໄດ້ມາຈາກດິນຂອງລັດທີ່ຖືກຈັດສັນ ໃຫ້ແກ່ປະຊາຊົນທັງ 5 ໝູ່ບ້ານເທດສະບານເມືອງ ເປັນທີ່ດິນ ເພື່ອປຸກສ້າງວັດ ໜຶ່ງວັດ ມີເນື້ອທີທັງໝົດ.41.046.276 ຕາແມັດ.

IV. ແຫຼ່ງທີ່ມາຂອງທຶນ.

- ແຫຼ່ງທີ່ມາຂອງທຶນທີ່ຈະກໍ່ສ້າງ ແມ່ນໄດ້ມາຈາກທຶນສະສົມຂອງພໍ່-ແມ່ ປະຊາຊົນພາຍໃນທັງ 5 ໝູ່ບ້ານ ເທດສະບານເມືອງຄື: ບ້ານ ແກ້ງກຸຍ-ແກ້ງກຽນ, ບ້ານ ຈອກ, ບ້ານວັກເໜືອ, ບ້ານວັກໄຕ້. ບຸກຄົນ, ນິຕິບຸກຄົນ ເປັນຜູ້ສະໜັບໜູນທຶນຮອນຕ່າງໆ.

- ໄດ້ຈາກການສະໜັບສະໜູນຊ່ວຍເຫຼືອຈາກພາກສ່ວນຫ້າງຮ້ານ, ບໍລິສັດ, ລັດວິສາຫະກິດຕ່າງໆທີ່ມີການ ອຸປະຖຳຊ່ວຍເຫຼືອ.

V. ການສຳຫຼວດ, ອອກແບບ ແລະ ການປະເມີນລາຄ່າ.

- ການສຳຫຼວດ, ການອອກແບບການກໍ່ສ້າງວັດ ແມ່ນພາກສ່ວນທີ່ກ່ຽວຂ້ອງຈາກຂັ້ນເມືອງ, ຂັ້ນແຂວງເປັນຜູ້ປະສານງານ ແລະ ຮັບຜິດຊອບໂດຍກົງເປັນຕົ້ນ: ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ຫ້ອງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວເມືອງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ຫ້ອງການພາຍ ໃນເມືອງກະລຶມ.

VI. ໂຄງປະກອບການຈັດຕັ້ງ.

- ໂຄງປະກອບການຈັດຕັ້ງທາງສາສະໜາ ພາຍໃນບ້ານ ມີຄົບຖ້ວນຕາມເງື່ອນໄຂຕົວຈິງເປັນຕົ້ນ: ພຣະສົງ-ສາມະເນນ, ສາລະວັດ, ເຖົ້າແກ່ແນວໂຮມບ້ານ, ແມ່ຍິງ, ຊາວໜຸ່ມ ແລະ ໜ່ວຍງານ ປກສ, ປກຊ ບ້ານຢ່າງຄົບຖ້ວນ.

VII. ຄາດຄະເນຜົນໄດ້ຮັບພາຍຫຼັງການກໍ່ສ້າງ.

- ໃນການກໍ່ສ້າງວັດຂອງທັງ 5 ໝູ່ບ້ານ ເທດສະບານເມືອງແມ່ນຈະສຳເລັດໃນປີ 2019. ໂດຍອີງໃສ່ເງື່ອນໄຂຕົວຈິງຕາມຄວາມພ້ອມຄວາມສາມາດ ແລະ ທຶນຮອນໃນການກໍ່ສ້າງ.

- ວຽກງານສາສະໜາ ແມ່ນວຽກງານທາງດ້ານຈິດຕະສາດ ທີ່ລະອຽດອ່ອນ, ການເຊື່ອຖືສາສະໜາ ຫຼື ຄວາມເຊື່ອຖືໃດໜຶ່ງ ແມ່ນຄວາມຮຽກຮ້ອງຕ້ອງການ ທາງດ້ານຈິດໃຈ ຂອງປະຊາຊົນລາວບັນດາເຜົ່າ ທີ່ມີມາເປັນເວລາດົນນານສືບເນື່ອງມາຮອດປະຈຸບັນ. ເພື່ອເຮັດໃຫ້ສິດໃນການເຊື່ອຖື ຫຼື ບໍ່ເຊື່ອຖື ສາສະໜາຂອງພົນລະເມືອງລາວ, ຕາມທີ່ໄດ້ກຳນົດໄວ້ໃນ ໃນລັດຖະທຳມະນູນ ແຫ່ງ ສປປ ລາວ ປີ 2002 ລັດຖະບານໄດ້ອອກດຳລັດ ວ່າດ້ວຍການຄຸ້ມຄອງ ແລະ ປົກປ້ອງ ການເຄື່ອນໄຫວ ສາສະໜາ ຢູ່ ສປປ ລາວສະບັບເລກທີ 92/ນຍ, ລົງວັນທີ 5 ກໍລະກົດ 2002.

- ເຖິງຢ່າງໃດກໍ່ຕາມ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ໃນການຈັດຕັ້ງປະຕິບັດນະ

ໂຍບາຍການປ່ຽນແປງໃໝ່ໃຫ້ສູ່ລວງເລິກ ແລະ ເພື່ອເຮັດໃຫ້ການເຄື່ອນໄຫວຂອງບັນດາການຈັດຕັ້ງສາສະໜາເຂົ້າສູ່ກົນໄກການຄຸ້ມຄອງລັດ ພາຍໃຕ້ລັດຖະທຳມະນູນ ກົດໝາຍ ແລະ ນິຕິກຳຕ່າງໆຂອງ ສປປ ລາວ.

- ເພື່ອສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີ ປອງດອງຂອງປະຊາຊົນລາວບັນດາເຜົ່າ ເວົ້າລວມ ເວົ້າສະເພາະຊາວເມືອງກະລຶມ ຮູ້ຈັກປົກປັກຮັກສາຮີດຄອງປະເພນີ, ສາສະໜາ ແລະ ຊົນຄົນໃນສັງຄົມ ໃຫ້ມີສ່ວນຮ່ວມ ປະກອບສ່ວນໃນການຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ດັ່ງນັ້ນ ທາງຄະນະພັກອຳນາດການປົກຄອງພ້ອມດ້ວຍພໍ່-ແມ່ປະຊາຊົນທັງ 5 ໝູ່ບ້ານຈຶ່ງຂຽນບົດວິພາກສະບັບນີ້ມາຍັງທ່ານ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂ ແລະ ຂໍອະນຸມັດ ການກໍ່ສ້າງວັດຕາມທາງຄວນດ້ວຍ.

ຕ່າງໜ້າ ການຈັດຕັ້ງສາສະໜາພຸດ

ນາຍບ້ານ ບ້ານ ແກ້ງກາຍ

ສີງຄຳ ສຸນບົວແກ້ວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງເຊກອງ

ເມືອງກະລຶມ

ເລກທີ...01.../ຄນປຈ

ເຊກອງ, ວັນທີ 07 ມີນາ 2019

ບົດບັນທຶກ

ກອງປະຊຸມ ການຄົ້ນຄວ້າ ປຶກສາຫາລື ກ່ຽວກັບ ການກໍ່ສ້າງ ສາສະນະສະຖານ(ວັດ)ຢູ່ບ້ານແກ້ງກຸຍ

ກອງປະຊຸມກ່ຽວກັບ ການຄົ້ນຄວ້າ ປຶກສາຫາລື ການກໍ່ສ້າງ ສາສະນະສະຖານ(ວັດ)ຢູ່ບ້ານແກ້ງກຸຍ ໄດ້ຈັດຂຶ້ນໃນຕອນເຊົ້າ ຂອງວັນທີ 7 ມີນາ 2019 ເວລາ: 08: 20 ນາທີ ຢູ່ທີ່ຫ້ອງປະຊຸມໃຫຍ່ ເມືອງກະລຶມ ໂດຍພາຍໃຕ້ການເປັນປະທານຮ່ວມ ທ່ານ ອຸດົມສຸກ ບຸດສອນທຽນ ຄະນະປະຈໍາພັກເມືອງ ເປັນປະທານກອງປະຊຸມ ຊຶ່ງເຂົ້າຮ່ວມຈໍານວນທັງໝົດ 22 ຄົນ, ຍິງ 01 ຄົນ, ໃນນັ້ນ ມີພຣະສົງ: 4 ອົງ; ມີບັນດາພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງ, ມີບັນດາຫ້ອງການທີ່ກ່ຽວຂ້ອງອ້ອມເມືອງ ແລະ ບັນດານາຍບ້ານ 5 ບ້ານ; ໃຫ້ກຽດເຂົ້າຮ່ວມມີລາຍຊື່ລະອຽດດັ່ງນີ້:

- ❖ ອົງການພຸດທະສາສະໜາແຂວງ
  1. ພຣະອາຈາຣຍ໌ ບຸນຍັງ ແກ້ວເມືອງຫຼວງ ຮອງປະທານ ອພສ ແຂວງ
  2. ພຣະ ອາຈາຣຍ໌ ປູ່ລົມສະໝຸກ ບຸດຕະລາດ ຫົວໜ້າກໍາມາທິການສາທາລະນຸປະການ;
  3. ພຣະອາຈາຣຍ໌ ຈັນທອນ ບານທະວີໃຊ ຫົວໜ້າກໍາມາທິການເຜີຍແຜ່ສິລະທໍາ ແລະ ກໍາມະຖານ;
  4. ພຣະອາຈາຣຍ໌ ບຸນຍືນ ບົ້ງທອງ ຫົວໜ້າຫ້ອງການ ອພສ ແຂວງ;
- ❖ ພະແນກການອ້ອມຂ້າງແຂວງ
  1. ທ່ານ ສົມແປງ ເອີດລັດດາ ບັນນາທິການຊົນເຜົ່າ-ສາສະໜາ ສະພາທ້ອງຖິ່ນ;
  2. ທ່ານ ວິໄຊ ຈິດຕະວົງ ຄະນະກໍາມະການແນວລາວສ້າງຊາດແຂວງ;
  3. ທ່ານ ຈັນໄທ ຄໍາມະວົງ ພະແນນຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ;
  4. ທ່ານ ຄໍາຊ່ອງ ຈຽງວັນນະ ຫົວໜ້າ ຂະແໜງຄຸ້ມຄອງພົນລະເມືອງ, ຊົນເຜົ່າ ແລະ ສາສະໜາ ພະແນກພາຍໃນ ແຂວງ
  5. ທ່ານ ຂັນຄໍາ ສຸເທບມະນີ ຮອງຂະແໜງໂຍທາທິການ ແລະ ຂົນສົ່ງ ແຂວງ.
- ❖ ອົງການປົກຄອງເມືອງ.
  1. ທ່ານ ອຸດົມສຸກ ບຸດສອນທຽນ ຄະນະປະຈໍາ ພັກເມືອງ
  2. ທ່ານ ພວງມະໄລ ແກ້ວບຸນຮຸ່ງ ຄະນະຫ້ອງວ່າການປົກຄອງເມືອງ
  3. ທ່ານ ສາຍລົມ ດາລາສຸກ ຫ້ອງການແນວລາວສ້າງຊາດເມືອງ.
  4. ທ່ານ ສຸດສັກສິດ ຍົດແສນວົງ ຫ້ອງການຖະແຫຼງຂາວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ.
  5. ທ່ານ ສອນເພັດ ສອນສຸພົນ ຫ້ອງການພາຍໃນເມືອງ.
  6. ທ່ານ ຄໍາພອຍ ລົບປັນຍາ ຫ້ອງການພາຍໃນເມືອງ.

7. ທ່ານ ສີສຸພົນ ເສນາວັນນາ ຫົວໜ້າໜ່ວຍງານຄຸ້ມຄອງພົນລະເມືອງ, ຊົນເຜົ່າ - ສາສະໜາ ຫ້ອງການພາຍໃນເມືອງ.

8. ທ່ານ ສາລີ ລາດສະວົງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ.

9. ທ່ານ ຄຳປະເສີດ ດອຍບົວລະພາ ຫ້ອງການ ໂຍທາທິການ ແລະ ຂົນສົ່ງເມືອງ.

❖ ອົງການປົກຄອງບ້ານ.

1. ທ່ານ ສີງຄຳ ນາຍບ້ານ ແກ້ງກຸຍ;
2. ທ່ານ ເຊີນ ນາຍບ້ານ ແກ້ງກຽນ;
3. ທ່ານ ຈຸລີສັກ ນາຍບ້ານ ວັກເໜືອ;
4. ທ່ານ ສົມພອນ ນາຍບ້ານ ວັກໄຕ້;

ກອງປະຊຸມກ່ຽວກັບການຄົ້ນຄວ້າ ປຶກສາຫາລື ການກໍ່ສ້າງ ສາສະນະສະຖານ(ວັດ) ຢູ່ບ້ານແກ້ງກຸຍ ເມືອງກະລຶມ[illegible] ໄດ້ແລກປ່ຽນຄຳຄິດຄຳເຫັນ ຢ່າງກົງໄປກົງມາ ເຮັດໃຫ້ກອງປະຊຸມດັ່ງກ່າວ ໄດ້ຕົກລົງເຫັນດີ ເປັນເອກະພາບ[illegible]ນີ້:

1. ການ[illegible]ເມືອງ ຊີ້ນຳ ຄະນະກຳມະການ ຂັ້ນເມືອງ ຂັ້ນບ້ານ ຊຸກຍູ້ ແນະນຳ ໃຫ້ປະຊາຊົນບັນເຜົ່າ ເຂົ້າໃຈຈຸດປະ[illegible]ກໍ່ສ້າງວັດແຫ່ງນີ້;

2. ໃຫ້[illegible]ພາຍໃນເມືອງສົມທົບຫ້ອງການທີ່ກ່ຽວຂ້ອງ ໂດຍສະເພາະ ຫ້ອງການແນວ, ຫ້ອງການໂຍທາທິການ ແລະ[illegible]ຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ, ຫ້ອງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ[illegible]ສະເໜີການນຳເມືອງ ອະນຸມັດ ກ່ຽວກັບ ສິ່ງທີ່ຈະກໍ່ສ້າງພາຍໃນວັດ;

3.ງົບປະ[illegible]ໃນການເດີນທາງ,ພັກເຊົາ ແລະອັດຕາກິນ ແລະອື່ນ ພະນັກງານໄປແລນວຽກ ນຳກະຊວງພາຍໃນມອບ[illegible]ມະການຂັ້ນເມືອງ ຄົ້ນຄວ້າພິຈາລະນາ ແລະ ຄິດໄລ່;

4.ໃຫ້[illegible]ວງ ຊອກຜູ້ທີ່ຈະເປັນ ເຈົ້າທິການວັດ ພຣະສົງ-ສາມະເນນ ບຸຄະລາກອນ ຜູ້ທີ່ປະກອບການ.

5.ຄົນ[illegible]ຊື່ອຖື, ຄູບາອາຈານເປັນຜູ້ຄຸ້ມຄອງ ວັດແມ່ນບ່ອນສູນລວມສາມັກຄີ ທາງດ້ານຮ່າງກາຍ - ຈິດໃຈ ຂໍສະ[illegible]ສັດທາໃນການສ້າງວັດຂອງອົງການຈັດຕັ້ງ ຂັ້ນເມືອງ, ຂັ້ນບ້ານ.

6. [illegible]ສານບ່ອນເຊັນ ຢາກໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າປັບປຸງຕື່ມ ເຊັ່ນ: ບ່ອນລາຍເຊັນບັດວິພາກ ແລະ [illegible]ຂອງນາຍບ້ານ(ບໍ່ໃຫ້ໃສ່ຕ່າງໜ້າສາສະໜາ, ອະນຸຍາດໃຫ້ໃສ່ນາຍບ້ານ) ໃຫ້ໃສ່ວັນເດືອນປີເກົ່າ.

7.ປົ[illegible]ເສີມຂະຫຍາຍທາງດ້ານວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ, ຂອງບັນດາເຜົ່າ ທັງເປັນພື້ນຖ[illegible]ຈັດຕັ້ງປະຕິບັດແຜນພັດທະນາທາງດ້ານເສດຖະກິດ - ສັງຄົມໃນອະນາຄົດ ເວົ້າລວມ, ເວົ້າສະເພາະຂອງທ້ອງຖິ່ນ

ກອງປະຊຸມ ປຶກສາຫາລື ກ່ຽວກັບການກໍ່ສ້າງວັດຢູ່ ຫ້ອງປະຊຸມໃຫຍ່ຂອງເມືອງກະລຶມ ໄດ້ດຳເນີນໄປເປັນເວລາ[illegible]ສິ້ນສຸດໃນເວລາ 11:30 ນາທີ ຂອງວັນເດືອນປີດຽວກັນ.

ປະທານກອງປະຊຸມ

ຜູ້ບັນທຶກກອງປະຊຸມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເມືອງກະລຶມ

, ລົງວັນທີ 7/3/2019

ໃບລົງທະບຽນ

ລ/ດ	ຊື່ແລະນາມສະກຸນ	ຕຳແໜ່ງ	ມາຈາກພາກສ່ວນ	ເບີໂທລະສັບ
1.	ນ. ຈັນພູ ພາສິດ	ນາຍບ້ານ	[illegible]	0305919273
2.	ທ. ສາລີ [illegible]	ວິຊາການ	[illegible]	91519111.
3.	ທ. ສຸລີສັກ	[illegible]	[illegible]	97314437
4.	[illegible]	[illegible]	[illegible]	
5.	ພຣະ ບຸນມີ [illegible]	[illegible]	[illegible]	96944656
6.	[illegible]	[illegible]	[illegible]	0309665937
7.	ທ. [illegible]	[illegible]	[illegible]	[illegible]
8.	[illegible]	[illegible]	[illegible]	02097672098
9.	[illegible]	[illegible]	[illegible]	0309948813
10.	[illegible]	[illegible]	[illegible]	0305[illegible]565
11.	[illegible]	[illegible]	[illegible]	22299207
12.	ທ. [illegible]	[illegible]	[illegible]	0309355691
13.	ທ. ຄຳປະເສີດ	[illegible]	[illegible]	030[illegible]98030
14.	ທ. ສຸດສັກສິດ	[illegible]	[illegible]	99903964
15.	ທ. ວິໄລ ຈິດຕະວົງ	[illegible]	-ນ-	
16.				
17.				
18.				
19.				
20.				
21.				
22.				
23.				
24.				
25.				
26.				
27.				
28.				
29.				
30.				

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ພະແນກຊັບພະຍາກອນທຳມະຊາດ ແລະ

ສິ່ງແວດລ້ອມປະຈຳແຂວງ/ນະຄອນ

ໃບຕາດິນລັດ

ເລກທີ : 297

ອອກຄັ້ງທີ : 1

ທີ່ຕັ້ງຕອນດິນ : 15. 002. 0002

ແຂວງ : ເຊກອງ

ເມືອງ : ກະລຶມ

ບ້ານ : ແກ້ງກຸຍ

ໜ່ວຍ :

ອອກໃຫ້ແກ່ : ວັດ ບ້ານ ແກ້ງກຸຍ

ເປົ້າໝາຍການນຳໃຊ້ : ປຸກສ້າງວັດ

ປະເພດທີ່ດິນ : ດິນວັດທະນະທຳ-ດິນວັດ, ໂບດ ແລະ ອື່ນໆ ເຂດ : ພູດອຍ-ໃຈກາງຕົວເມືອງ

ປຶ້ມທະບຽນທີ່ດິນເຫຼັ້ມທີ : 6 ໃບທີ : 47 ແຜນທີ່ຕາດິນເລກທີ : C 704 - 744/09

ຕອນດິນເລກທີ : 17 ເນື້ອທີ່ດິນ : 41,252 ຕາແມັດ

ມາດຕາສ່ວນ : 1/3.000

ແຜນທີ່ຕອນດິນ



ວັນທີ : 4 . ເມສາ 2019

ຫົວໜ້າພະແນກ

ບຸນມີ ສາຍນ້ຳລິນ